**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອຸດົມໄຊ ເລກທີ 238/ອຊ

ອຸດົມໄຊ, ລົງວັນທີ: .08 ກຸມພາ 2024

# ຂໍ້ຕົກລົງ
# ວ່າດ້ວຍ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຈາກໂຄງການປັບປຸງ ທາງຫຼວງແຫ່ງຊາດ 2W ແລະ 2E ພາຍໃຕ້ໂຄງການ ພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ (SEARECC)

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍທາງຫຼວງ (ສະບັບປັບປຸງ), ເລກ ທີ 03/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ ສະບັບເລກທີ 84/ລບ, ລົງວັນທີ 5 ເມສາ 2016;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຊຸດທີ II ສະບັບເລກທີ 040/ສພຂ.ອຊ, ລົງວັນທີ 12 ມັງກອນ 2024.

## ເຈົ້າແຂວງ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຄຸ້ມຄອງ, ຕິດຕາມກວດກາກ່ຽວກັບການຄິດໄລ່ລາຄາຫົວໜ່ວຍທີ່ດິນ ແລະ ຊັບສິນເທິງໜ້າດິນ ເພື່ອທົດແທນຄ່າເສຍຫາຍ ໃຫ້ຜູ້ໄດ້ຮັບຜົນກະທົບຈາກ ໂຄງການປັບປຸງທາງຫຼວງແຫ່ງຊາດ 2W ແລະ 2E ພາຍໃຕ້ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ ແນ່ໃສ່ຮັບປະກັນໃຫ້ມີຄວາມຍຸຕິທຳ, ໂປ່ງໃສ ສາມາດກວດສອບໄດ້, ມີຄວາມສະຫງົບ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ພ້ອມທັງສອດຄ່ອງກັບການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມ ແຕ່ລະໄລຍະ.

**ມາດຕາ 2 ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ**

ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ແມ່ນການກຳນົດຕົວເລກຄິດໄລ່ເປັນເງິນຕໍ່ຫົວໜ່ວຍ ເພື່ອທົດແທນຄືນໃຫ້ຜູ້ທີ່ໄດ້ຮັບຜົນກະທົບ

ການທົດແທນຄ່າເສຍຫາຍ ແມ່ນການທົດແທນສຳລັບທີ່ດິນ, ສິ່ງປຸກສ້າງ, ຜົນຜະລິດກະສິກຳ ແລະ ລາຍຮັບທີ່ໄດ້ຮັບຜົນກະທົບ

**ມາດຕາ 3 ອະທິບາຍຄຳສັບ**

**ຄຳສັບທີ່ນຳມາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:**

1. **ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້** ໝາຍເຖິງການເຊື່ອມຈອດ-ເຊື່ອມໂຍງ ກິດຈະການທີ່ກຳນົດປະເພດ, ເຂດ, ພື້ນທີ່ຮອງຮັບ ແລະ ເງື່ອນໄຂຂອງການປັບປຸງການເຊື່ອມຈອດ-ເຊື່ອມໂຍງຂອງ ສປປ ລາວ ແລະ ພາກພື້ນ, ການພັດທະນາການບໍລິການຂົນສົ່ງ ແລະ ການຄຸ້ມຄອງກິດຈະກຳຂ້າມດ່ານຊາຍແດນ ແລະ ສ້າງຂີດຄວາມສາມາດຂອງສະຖາບັນ ຂອງພາກພື້ນທີ່ກ່ຽວຂ້ອງ ແລະ ລະບຽບການຄຸ້ມຄອງ ການວາງແຜນກິດຈະກຳ ການຂົນສົ່ງ ແລະ ການລົງທຶນ ລວມທັງຂັ້ນຕອນ, ວິທີການ, ງົບປະມານ ແລະ ກຳນົດເວລາໃນການຈັດຕັ້ງປະຕິບັດ;

2. **ເຈົ້າຂອງໂຄງການ** ໝາຍເຖິງກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ ຊຶ່ງມີໜ້າທີ່ຮັບຜິດຊອບໃນການສຶກສາ, ສຳຫຼວດ, ອອກແບບ, ກໍ່ສ້າງ ແລະ/ຫຼື ຈັດຕັ້ງປະຕິບັດໂຄງການ;

3. **ໂຄງການພັດທະນາ** ໝາຍເຖິງ ການລົງທຶນ ຫຼື ກິດຈະການຕ່າງໆທີ່ດຳເນີນໃນຂອບເຂດທີ່ໄດ້ກຳນົດໄວ້ ຊຶ່ງຕ້ອງໄດ້ທົດແທນຄ່າເສຍຫາຍຕໍ່ຜູ້ທີ່ໄດ້ຮັບຜົນກະທົບ;

4. **ຜູ້ໄດ້ຮັບຜົນກະທົບ** ໝາຍເຖິງ ບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາໃນຮູບຜົນກະທົບແບບຖາວອນ ຫຼື ແບບຊົ່ວຄາວ ຊຶ່ງເສຍທີ່ດິນ ຫຼື ຊັບສິນໃດໜຶ່ງ, ບໍ່ວ່າທາງກົງ ຫຼື ທາງອ້ອມຈາກການພັດທະນາໂຄງການດັ່ງກ່າວ ຊຶ່ງໄດ້ຮັບການຂຶ້ນທະບຽນໄວ້ໃນວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບ;

5. **ປະເພດຊັບສິນທີ່ໄດ້ຮັບຜົນກະທົບ** ໝາຍເຖິງ ທີ່ດິນ, ສິ່ງປຸກສ້າງ, ພືດລະປູກ ແລະ ອື່ນໆ ອີງຕາມການນຳໃຊ້ຕົວຈິງ ໃນດິນຕອນນັ້ນ;

6. **ຜົນກະທົບແບບຖາວອນ** ໝາຍເຖິງ ຊັບສິນທີ່ໄດ້ຮັບຜົນກະທົບແບບຖາວອນ ແລະ ສູນເສຍສິດນຳໃຊ້ຂອງເຈົ້າຂອງເດີມແບບຖາວອນ ໂດຍມອບສິດນຳໃຊ້ໃຫ້ກັບເຈົ້າຂອງໂຄງການເປັນຜູ້ນຳໃຊ້ຕໍ່ໄປ;

7. **ຜົນກະທົບແບບຊົ່ວຄາວ** ໝາຍເຖິງ ຜົນກະທົບຕໍ່ຊັບສິນໃນໄລຍະໃດໜຶ່ງ ຊຶ່ງອາດຈະຖືກລົບກວນໃນໄລຍະການກໍ່ສ້າງເທົ່ານັ້ນ ພາຍຫຼັງສຳເລັດການກໍ່ສ້າງແລ້ວ ພື້ນທີ່ດັ່ງກ່າວຈະໄດ້ຮັບການປັບປຸງຄືນໃຫ້ຢູ່ໃນສະພາບເດີມ ແລະ ມອບສິ່ງໃຫ້ເຈົ້າຂອງເດີມຄືນ ໂດຍບໍ່ມີການເສຍສິດນຳໃຊ້ແຕ່ຢ່າງໃດ;

8. **ການຫຍັບຍ້າຍ** ໝາຍເຖິງ ການຫຍັບຍ້າຍຊັບສິນບາງສ່ວນ ຫຼື ຫຍັບຍ້າຍສະເພາະຊັບສິນທີ່ໄດ້ຮັບຜົນກະທົບເທົ່ານັ້ນ ອອກຈາກພື້ນທີ່ຜົນກະທົບ ໄປຍັງພື້ນທີ່ບໍ່ຖືກຜົນກະທົບ;

9. **ການຊ່ວຍເຫຼືອໃນໄລຍະຂ້າມຜ່ານຂອງປະຊາຊົນ** ໝາຍເຖິງການຊ່ວຍເຫຼືອຈາກເຈົ້າຂອງໂຄງການໃຫ້ແກ່ຜູ້ໄດ້ຮັບຜົນກະທົບເຮືອນ ແລະ ຮ້ານຄ້າ ໃນໄລຍະການກໍ່ສ້າງເຮືອນ ແລະ ຮ້ານຄ້າຄືນໃໝ່ ແລະ ໃນໄລຍະທີ່ບໍ່ສາມາດດຳເນີນທຸລະກິດໄດ້ (ອີງໃສ່ອັດຕາການໄລ່ລຽງລາຍຮັບປະຈຳປີຂອງຂະແໜງການສ່ວຍສາອາກອນ);

10. **ນະໂຍບາຍ** ໝາຍເຖິງການກຳນົດເງື່ອນໄຂການຈ່າຍຄ່າທົດແທນຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຊຶ່ງຈະເປັນຮູບແບບການປ່ຽນແທນ ຫຼື ທົດແທນດ້ວຍເງິນ;

11. **ມູນຄ່າປ່ຽນແທນ** ໝາຍເຖິງມູນຄ່າທີ່ຄິດໄລ່ເປັນເງິນທີ່ຈຳເປັນຕ້ອງນຳໃຊ້ ເພື່ອປ່ຽນແທນທີ່ດິນ, ສິ່ງປຸກສ້າງ, ພືດລະປູກ ແລະ ລາຍຮັບທີ່ໄດ້ຮັບຜົນກະທົບ;

12. **ລາຄາຫົວໜ່ວຍທົດແທນ** ໝາຍເຖິງອັດຕາຄິດໄລ່ທີ່ນຳໃຊ້ ເພື່ອເປັນພື້ນຖານໃນການຄິດໄລ່ມູນຄ່າທົດແທນຊັບສິນແຕ່ລະປະເພດ ທີ່ໄດ້ຮັບຜົນກະທົບຈາກໂຄງການ;

13. **ຜູ້ດ້ອຍໂອກາດ** ໝາຍເຖິງ ບຸກຄົນທີ່ໄດ້ຮັບຜົນກະທົບເຊັ່ນ: ຜູ້ພິການ, ຜູ້ເສຍອົງຄະ, ຜູ້ສູງອາຍຸ 65 ປີຂຶ້ນໄປ, ເດັກນ້ອຍ, ແມ່ໝ້າຍ ແລະ ແມ່ຮ້າງ ທີ່ມີພາລະຮັບຜິດຊອບຄອບຄົວ ຊຶ່ງມີຄວາມສ່ຽງທີ່ຈະທຸກຍາກລົງຫຼາຍກ່ວາຜູ້ຄົນອື່ນ ທີ່ໄດ້ຮັບຜົນກະທົບຈາກໂຄງການ;

14. **ຄອບຄົວທຸກຍາກ** ໝາຍເຖິງ ຄອບຄົວທີ່ມີລາຍໄດ້ຕ່ຳກວ່າ ລາຍຮັບຄວາມທຸກຈົນແຫ່ງຊາດ;

15. **ການເກັບຂໍ້ມູນ ຂຶ້ນບັນຊີຊັບສິນ** ໝາຍເຖິງການເກັບກຳຂໍ້ມູນຂອງຊັບສິນ, ແບບສອບຖາມ, ວັດແທກ, ບັນທຶກເຂົ້າແບບຟອມ ແລະ ຮັບຮູ້ຮ່ວມກັນ ລະຫວ່າງ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຕໍ່ຊັບສິນຕ່າງໆ ກັບ ຄະນະກຳມະການ ແລະ ມີການຢັ້ງຢືນຮັບຮອງຈາກອຳນາດການປົກຄອງຂັ້ນຕ່າງໆ;

16. **ຂໍ້ຕົກລົງທົດແທນ** ໝາຍເຖິງຂໍ້ຕົກລົງທົດແທນລະຫວ່າງ ໂຄງການກັບຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ ໂດຍມີການລະບຸເນື້ອໃນທີ່ຊັດເຈນ ສາມາດຈັດຕັ້ງປະຕິບັດໄດ້ປະກອບມີ ຂໍ້ມູນຄອບຄົວໄດ້ຮັບຜົນກະທົບ, ຂໍ້ມູນຊັບສິນ, ຂໍ້ມູນການຄິດໄລ່ມູນຄ່າທົດແທນຊັບສິນແຕ່ລະລາຍການ, ມູນຄ່າທົດແທນລວມ ແລະ ເງື່ອນໄຂຂໍ້ຕົກລົງລະບຸໄວ້ຢ່າງຊັດເຈນ;

17. **ສິດຕາມກົດໝາຍ** ໝາຍເຖິງມີເອກະສານສິດຄົບຖ້ວນຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ;

18. **ສິດນຳໃຊ້ທີ່ດິນຕາມປະເພນີ** ໝາຍເຖິງສິດນຳໃຊ້ຊັບສິນທີ່ດິນຂອງບຸກຄົນ ຫຼື ລວມບ້ານດ້ວຍການບຸກເບີກ, ພັດທະນາທີ່ໄດ້ປົກປັກຮັກສາ ແລະ ນຳໃຊ້ຊັບສິນທີ່ດິນເປັນປົກກະຕິ, ເປີດເຜີຍເປັນເວລາຊາວປີຕໍ່ເນື່ອງ ແຕ່ບໍ່ມີເອກະສານໃດໆຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ ແລະ ທີ່ດິນນັ້ນ ບໍ່ຢູ່ໃນເຂດສະຫງວນຂອງລັດ;

19. **ເຂດໃຈກາງເມືອງໝາຍເຖິງ**: ເຂດທີ່ມີຄວາມໜາແໜ້ນດ້ານສິ່ງກໍ່ສ້າງ ແລະ ດ້ານປະຊາກອນສູງກວ່າເຂດອື່ນ, ມີລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກຄົບຊຸດ, ທັງເປັນສູນການຄ້າ, ບໍລິການ ແລະ ການດຳເນີນທຸລະກິດອື່ນໆ, ຍົກເວັ້ນການດຳເນີນກິດຈະການໂຮງງານອຸດສາຫະກຳທັງສາມລະດັບ ຫຼື ສາງທີ່ມີເນື້ອທີ່ກວ້າງຂວາງ;

20. **ເຂດອ້ອມຂ້າງໃຈກາງເມືອງໝາຍເຖິງ**: ເຂດທີ່ມີຄວາມໜາແໜ້ນດ້ານສິ່ງກໍ່ສ້າງ ແລະ ດ້ານປະຊາກອນຕ່ຳກວ່າເຂດຕົວເມືອງ, ມີເຂດສີຂຽວ, ມີລະບົບສາທາລະນະປະໂຫຍດ ແລະ ສາທາລະນູປະໂພກຄົບຊຸດ, ທັງເປັນສູນການຄ້າ, ການບໍລິການ ແລະ ການດຳເນີນທຸລະກິດອື່ນໆ, ຍົກເວັ້ນການດຳເນີນກິດຈະການໂຮງງານອຸດສະຫະກຳລະດັບສອງ;

21. **ເຂດຊານເມືອງ**ໝາຍເຖິງເຂດເນື້ອທີ່ດິນທີ່ຢູ່ອ້ອມຮອບເຂດໃຈກາງຕົວເມືອງ, ເປັນເຂດທີ່ມີຄວາມໜາແໜ້ນຂອງສິ່ງປຸກສ້າງຕ່ຳກວ່າເຂດອ້ອມຕົວເມືອງ, ມີກິດຈະກຳ, ກະສິກຳ, ຫັດຖະກຳ ແລະ ໂຮງງານອຸດສະຫະກຳອັນດັບສອງ ແລະ ອັນດັບສາມ, ລວມທັງມີເຂດເປົ່າວ່າງຫຼາຍ;

22. **ການຊ່ວຍເຫຼືອພິເສດ** ໝາຍເຖິງ ການຊ່ວຍເຫຼືອເປັນວັດຖຸ ຫຼື ເປັນເງິນ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບທີ່ດ້ອຍໂອກາດ, ຄອບຄົວທຸກຍາກ, ຄອບຄົວອານາຖາ, ຄອບຄົວທີ່ຖືກຫຍັບຍ້າຍເຮືອນ ແລະ ຮ້ານຄ້າໝົດຫຼັງ;

23. **ການສູນເສຍລາຍໄດ້** ໝາຍເຖິງການສູນເສຍລາຍໄດ້ຈາກການປິດກິດຈະການໃນໄລຍະເວລາການກໍ່ສ້າງ;

24. **ເຂດສະຫງວນທາງຫຼວງແຫ່ງຊາດ** ໝາຍເຖິງການກຳນົດພື້ນທີ່ທາງຫຼວງແຫ່ງຊາດມີລວງກວ້າງເບື້ອງລະ 25 ແມັດ (ຊາວຫ້າແມັດ) ນັບແຕ່ໃຈກາງທາງອອກໄປ;

25. **ທາງຫຼວງແຫ່ງຊາດໝາຍເລກ 2W - 2E ໝາຍເຖິງ:**

**- ທາງຫຼວງແຫ່ງຊາດໝາຍເລກ 2W (ຕາເວັນຕົກ)** ແມ່ນມີຈຸດເລີ່ມຕົ້ນ ຈາກເມືອງໄຊ ແຂວງອຸດົມໄຊ ຫາ ຈຸດສຸດທ້າຍ ດ່ານຫ້ວຍໂກນ-ນ້ຳເງິນ (ຊາຍແດນລາວ-ໄທ) ບ້ານດ່ານ ເມືອງເງິນ ແຂວງໄຊຍະບູລີ

**- ທາງຫຼວງແຫ່ງຊາດເລກ 2E (ຕາເວັນອອກ)** ແມ່ນມີຈຸດເລີ່ມຕົ້ນ ຈາກເມືອງໄຊ ແຂວງອຸດົມໄຊ ຫາ ຈຸດສຸດທ້າຍ ດ່ານປາງຫົກ-ໄຕຈາງ (ຊາຍແດນລາວ-ຫວຽດນາມ) ເມືອງຂວາ ແຂວງຜົ້ງສາລີ

26. **ທາງ ປະກອບມີ 4 ປະເພດຄື**: ທາງຫຼວງແຫ່ງຊາດ, ທາງຫຼວງຂອງແຂວງ, ທາງຊອຍ ແລະ ທາງຮ່ອມ;

26.1ທາງຫຼວງແຫ່ງຊາດ ແມ່ນທາງເຊື່ອມຕໍ່ລະຫວ່າງ ແຂວງ ກັບ ແຂວງ;

26.2ທາງຫຼວງຂອງແຂວງ ແມ່ນທາງເຊື່ອມຕໍ່ລະຫວ່າງ ເມືອງ ກັບ ເມືອງ, ບ້ານ ກັບ ບ້ານ ທີ່ເປັນຈຸດທີ່ຕັ້ງທາງດ້ານເສດຖະກິດ ແລະ ທີ່ຢູ່ອາໄສສໍາຄັນຕ່າງໆ;

26.3ທາງຊອຍ ແມ່ນທາງເຊື່ອມຕໍ່ລະຫວ່າງ ບ້ານ ກັບ ບ້ານ, ສໍານັກງານອົງການຕ່າງໆ ທີ່ແຍກອອກຈາກທາງຫຼວງແຫ່ງຊາດ ແລະ ທາງຫຼວງຂອງແຂວງ;

26.4ທາງຮ່ອມ ແມ່ນທາງທີ່ເຂົ້າໄປຫາບ່ອນທີ່ພັກອາໄສ, ສໍານັກງານອົງການ ທີ່ບໍ່ຕິດກັບທາງຫຼວງແຫ່ງຊາດ ແລະ ທາງຫຼວງຂອງແຂວງ.

27. **ເຄື່ອງໝາຍ** ໝາຍເຖິງລະຫັດທີ່ສະແດງເປັນອັກສອນ ແລະ ຕົວເລກ ຕາມທີ່ໄດ້ກໍານົດໄວ້ໃນຕາຕະລາງມີດັ່ງນີ້:

ກ, ຂ, ຄ, ງ ໝາຍເຖິງ ປະເພດຂອງຊັບສິນ;

ກ1..., ຂ1..., ຄ1..., ງ1... ໝາຍເຖິງ ປະເພດຍ່ອຍຂອງຊັບສິນ.

**ມາດຕາ 4 ນະໂຍບາຍກ່ຽວກັບລາຄາຫືອໜ່ວຍທົດແທນຄ່າເສຍຫາຍ**

1. ແຂວງຊຸກຍູ້ສົ່ງເສີມທຸກພາກສ່ວນ ບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ອົງການຈັດຕັ້ງສັງຄົມປະກອບສ່ວນ ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາໂຄງການ ເປັນຕົ້ນແມ່ນການປະກອບສ່ວນຢ່າງຕັ້ງໜ້າ ດ້ານເຫື່ອແຮງ, ຈິດໃຈ, ຊັບສິນ ແລະ ວັດຖຸອື່ນໆ ໂດຍສອດຄ່ອງແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ ທີ່ໄດ້ກໍານົດໄວ້;

2. ແຂວງຮັບຮູ້ຊັບສິນທີ່ດິນ ແລະ ສິ່ງປຸກສ້າງ (ທີ່ມີກ່ອນການຂຶ້ນບັນຊີຜູ້ໄດ້ຮັບຜົນກະທົບ) ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໂດຍມີການປະສານສົມທົບ, ປຶກສາຫາລື ແລະ ເຂົ້າຮ່ວມລະຫວ່າງຜູ້ພັດທະນາໂຄງການ, ຜູ້ໄດ້ຮັບຜົນກະທົບ, ອົງການຈັດຕັ້ງພາກລັດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ;

3. ແຂວງປົກປ້ອງ ແລະ ຮັບປະກັນສິດຜົນປະໂຫຍດອັນຊອບທໍາ ຂອງຜູ້ທີ່ໄດ້ຮັບຜົນກະທົບ ແລະ ເຈົ້າຂອງ ໂຄງການຕາມກົດໝາຍ ແລະ ລະບຽບການ ຢ່າງສະເໝີພາບ ແລະ ສາມາດກວດສອບໄດ້;

4. ຜູ້ໄດ້ຮັບຜົນກະທົບສູນເສຍທີ່ດິນພຽງແຕ່ສ່ວນໜຶ່ງ ແລະ ມີທີ່ດິນຍັງເຫຼືອ ສາມາດນໍາໃຊ້ໄດ້ຢູ່ ເຈົ້າຂອງໂຄງການຕ້ອງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍຕ່າງໆ ໃນການດັດແກ້ ແລະ ອອກໃບຕາດິນຄືນໃໝ່ ເພື່ອເຮັດໃຫ້ຜູ້ຖືກຜົນກະທົບໄດ້ຮັບເອກະສານ ກ່ຽວກັບ ສິດນໍາໃຊ້ທີ່ດິນຕອນນັ້ນຕາມກົດໝາຍ ແລະ ລະບຽບການ;

5. ການທົດແທນຄ່າເສຍຫາຍສໍາລັບສິ່ງປຸກສ້າງ, ຕົ້ນໄມ້ ແລະ ຜົນຜະລິດກະສິກໍາ ພາຍຫຼັງສໍາເລັດການຈ່າຍຄ່າຊົດເຊີຍ, ທົດແທນຄ່າເສຍຫາຍ ແລ້ວສິ່ງປຸກສ້າງ, ຕົ້ນໄມ້ ແລະ ຜົນຜະລິດກະສິກໍາ ຍັງເປັນກໍາມະສິດຂອງ ເຈົ້າຂອງເດີມ ຊຶ່ງມີສິດການຍຸບມ້າງ, ຮື້ຖອນສິ່ງປູກສ້າງ, ການຕັດຕົ້ນໄມ້ໄປນໍາໃຊ້ຕໍ່ໂດຍນໍາໃຊ້ເງິນທີ່ໄດ້ຮັບຈາກຄ່າທົດແທນ ແຕ່ຕ້ອງປະຕິບັດຕາມເວລາທີ່ທາງໂຄງການກໍານົດໄວ້, ຜູ້ພັດທະນາໂຄງການ ຕ້ອງໄດ້ແຈ້ງໃຫ້ຜູ້ໄດ້ຮັບຜົນກະທົບຮັບຮູ້ກ່ອນລ່ວງໜ້າ 30 ວັນ (ສາມສິບວັນ) ແລະ ຖ້າກາຍກໍານົດເວລາດັ່ງກ່າວຜູ້ພັດທະນາໂຄງການອາດຈະໄດ້ນໍາໃຊ້ກົນຈັກຫຸບມ້າງ ແລະ ອະນາໄມສິ່ງກີດຂວາງນັ້ນອອກ;

6. ພາຍຫຼັງສໍາເລັດການສໍາຫຼວດ ແລະ ເກັບກໍາຂໍ້ມູນຜົນກະທົບ ເຈົ້າຂອງຊັບສິນຜູ້ໄດ້ຮັບຜົນກະທົບ ຍັງສາມາດດໍາເນີນກິດຈະການຕາມປົກກະຕິ ຈົນກວ່າຈະຂຶ້ນບັນຊີຮັບຮອງທະບຽນສິດຜູ້ໄດ້ຮັບຜົນກະທົບ ຈາກຄະນະກໍາມະການ ແລະ ດໍາເນີນການທົດແທນຄ່າເສຍຫາຍ ຕາມມາດຕາ 17 ຂອງຂໍ້ຕົກລົງສະບັບນີ້;

7. ເຈົ້າຂອງຜູ້ພັດທະນາໂຄງການ ມີສິດໃນການປຶກສາຫາລື ແລະ ເຈລະຈາ ກັບຜູ້ໄດ້ຮັບຜົນກະທົບ ກ່ຽວກັບການທົດແທນຄ່າເສຍຫາຍ ທີ່ບໍ່ໄດ້ມອນໃນແຜນການທີ່ຮັບຮອງນັ້ນ, ແຕ່ຖ້າທັງສອງຝ່າຍບໍ່ສາມາດຕົກລົງກັນໄດ້ ແມ່ນໃຫ້ສະເໜີເຖິງຄະນະກໍາມະການທົດແທນຄ່າເສຍຫາຍ ເປັນຜູ້ຄົ້ນຄວ້າພິຈາລະນາ;

8. ຜູ້ໄດ້ຮັບຜົນກະທົບຈາກໂຄງການພັດທະນາ ຈະໄດ້ຮັບການທົດແທນຄ່າເສຍຫາຍກ່ອນການລົງມືຈັດຕັ້ງປະຕິບັດໂຄງການ ເພື່ອໃຫ້ເວລາ ຜູ້ຖືກຜົນກະທົບໄດ້ກະກຽມຍົກຍ້າຍ ແລະ ປຸກສ້າງທີ່ຢູ່ອາໄສໃໝ່;

**ມາດຕາ 5 ຫຼັກການລາຄາທົດແທນຄ່າເສຍຫາຍ**

**ຫຼັກການລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ໂດຍປະຕິບັດຕາມຫຼັກການດັ່ງນີ້:**

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ກໍຄືແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງວາງອອກ;
2. ສອດຄ່ອງກັບເງື່ອນໄຂ ແລະ ສະພາບຄວາມເປັນຈິງ ຮັບປະກັນຄວາມໂປ່ງໃສ, ຖືກຕ້ອງ, ເປີດເຜີຍ, ມີຄວາມຍຸຕິທຳ ແລະ ສາມາດກວດສອບໄດ້ ຕາມກົດໝາຍ ແລະ ລະບຽບການ;
3. ມີການປະສານສົມທົບ, ປຶກສາຫາລື ແລະ ເຂົ້າຮ່ວມລະຫວ່າງ ຜູ້ພັດທະນາໂຄງການ, ປະຊາຊົນຜູ້ໄດ້ຮັບຜົນກະທົບ, ຊັ້ນຄົນໃນສັງຄົມ, ການຈັດຕັ້ງລັດ ແລະ ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
4. ຮັບປະກັນການຄິດໄລ່ທາງດ້ານວິຊາການຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ໃຊ້ສະເພາະຂອບເຂດທີ່ຖືກຜົນກະທົບຈາກໂຄງການປັບປຸງທາງຫຼວງແຫ່ງຊາດ 2W ແລະ 2E ພາຍໃຕ້ໂຄງການພັດທະນາຕາມແລວທາງເສດຖະກິດ ອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ ຊຶ່ງປະກອບມີ 05 ເມືອງ 82 ບ້ານດັ່ງລາຍລະອຽດລຸ່ມນີ້:

– ເມືອງຫຼາ ມີ 12 ບ້ານ ປະກອບມີບ້ານ: ບ້ານຫ້ວຍຊຸ, ບ້ານສາມັກຄີໄຊ, ບ້ານໂພນໄຊ, ບ້ານຫ້ວຍຫຼາ, ບ້ານໜອງບົວ, ບ້ານດອນສະອາດ, ບ້ານປາກກໍ, ບ້ານຫາດແອນ, ບ້ານຫາດນົກ, ບ້ານຫ້ວຍແພ, ບ້ານຫ້ວຍຈາຍ ແລະ ບ້ານທົ່ວແກ້ງ;

– ເມືອງໄຊ ມີ 15 ບ້ານ ປະກອບມີບ້ານ: ບ້ານຫ້ວຍຊຸມ, ບ້ານຖ້ຽວ,ບ້ານກອນແກ່ນ, ບ້ານນາມິນ, ບ້ານນາຮ້ອງ, ບ້ານຫ້ວຍຫຼຸມ, ບ້ານນາໜີ, ບ້ານນາເລົາ, ບ້ານດອນໄຊ, ບ້ານດອນແກ້ວ, ບ້ານພູຂຽວ, ບ້ານປ່າສັກ, ບ້ານມອນໃຕ້, ບ້ານລ້ອງກໍເດື່ອ ແລະ ບ້ານວຽງສາ;

– ເມືອງແບງ ມີ 28 ບ້ານປະກອບມີ: ບ້ານເພຍຫົວນ້ຳ, ບ້ານໂພນສະອາດ, ບ້ານນາປາ, ບ້ານກົວສັງວັນ, ບ້ານນາແມດ, ບ້ານທ່າມື່ນ, ບ້ານປາງທອງ, ບ້ານຫ້ວຍລໍ, ບ້ານຊຽງແລ, ບ້ານຍໍ້, ບ້ານນາໄລ, ບ້ານປາງເດື່ອ, ບ້ານໂພແກ້ວ, ບ້ານແບງຄຳ, ບ້ານນາຫ້ວຍ, ບ້ານແບງຫຼວງ, ບ້ານຫ້ວຍລາ, ບ້ານທ່າກາດ, ບ້ານໂພໄຊ, ບ້ານກອນຄຳ, ບ້ານນາບອນ, ບ້ານຫ້ວຍຫຼູກ, ບ້ານພູຄຳ, ບ້ານສາມກາງ, ບ້ານໂພນສີ, ບ້ານວັງວະ, ບ້ານປາງສີ ແລະ ບ້ານນາມອນ;

– ເມືອງຮຸນ ມີ 24 ບ້ານປະກອບມີ: ບ້ານຫ້ວຍພະ, ບ້ານວັງຕັ້ງ, ບ້ານລາງຈິງ, ບ້ານນາເງິນ, ບ້ານດອນຄຳ , ບ້ານວັງລຳ, ບ້ານດອນແກ້ວ, ບ້ານໜອງບົວແດງ, ບ້ານໂພນສະຫວັນ, ບ້ານໂພນສະຫວາດ, ບ້ານນ້ຳຂອງ, ບ້ານນາໂຮມ, ບ້ານນ້ຳອຸ່ນ, ບ້ານແຟນ, ບ້ານຈັນໄຕ, ບ້ານນາທອງ, ບ້ານນາໂຄ້ງ, ບ້ານບອມເລົາ, ບ້ານນ້ຳຍອນ, ບ້ານນາວາງ, ບ້ານສີບຸນເຮືອງ, ບ້ານໂພນສະຫວ່າງ, ບ້ານອຸດົມ ແລະ ບ້ານໄຊມຸງຄຸນ;

– ເມືອງປາກແບງ ມີ 03 ບ້ານປະກອບມີ: ບ້ານໄຊຊະນະ, ບ້ານດອນສະອາດ ແລະ ບ້ານແກ້ງຊ້າງ.

## ໝວດທີ 2
## ການກຳນົດປະເພດຊັບສິນ,ຮູບແບບຜົນກະທົບຕໍ່ຊັບສິນ ແລະ ປະເພດຜົນກະທົບ

**ມາດຕາ 7 ປະເພດຊັບສິນ**

ປະເພດຊັບສິນ ທີ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງທາງຫຼວງແຫ່ງຊາດ 2W ແລະ 2E ພາຍໃຕ້ໂຄງການພັດທະນາຕາມແລວທາງເສດຖະກິດ ອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ ໄດ້ຈັດແບ່ງອອກເປັນ 4 ປະເພດຄື: (ກ) ດິນກະສິກຳ, (ຂ) ດິນປຸກສ້າງ, (ຄ) ສິ່ງປຸກສ້າງ, (ງ) ຕົ້ນໄມ້ ແລະ ພືນລະປູກ.

**ກ. ປະເພດດິນກະສິກຳ**

- **ຊັບສິນປະເພດດິນນາ:** ໝາຍເຖິງ ດິນທີ່ຜ່ານການບຸກເບີກດ້ວຍແຮງງານຄົນ ຫຼື ເຄື່ອງກົນຈັກ, ບໍລິເວນດັ່ງກ່າວໄດ້ຜ່ານການຂຸດ-ບຸກເບີກ ເພື່ອເຮັດເປັນບ່ອນປູກຝັງທຳການຜະລິດ ແລະ ປົວລະບັດເປັນປະຈຳ.

- **ຊັບສິນປະເພດດິນສວນ:** ແມ່ນດິນທີ່ບຸກເບີກນຳໃຊ້ ແລະ ປົວລະບັດຮັກສາຢ່າງຕໍ່ເນື່ອງ ມີຜົນລະປູກ, ຕົ້ນໄມ້ ແລະ ອື່ນໆ ເຫັນໄດ້ປະຈັກຕາ ໃນໄລຍະເກັບກຳຂໍ້ມູນ.

**ຂ. ປະເພດດິນປຸກສ້າງ**

- ແມ່ນດິນທີ່ນຳໃຊ້ເພື່ອປຸກສ້າງທີ່ຢູ່ອາໄສ ຕ້ອງປະກອບມີ ສິ່ງປຸກສ້າງຕັ້ງຢູ່ໃນດິນຕອນນັ້ນໃນເວລາເກັບຂໍ້ມູນ ຫຼື ມີເອກະສານສິດລະບຸເປັນດິນປຸກສ້າງ (ແຕ່ຍັງບໍ່ທັນມີສິ່ງປຸກສ້າງ) ໃຫ້ສອດຄ່ອງກັບລະບຽບຫຼັກການອອກໃບຕາດິນ.

**ຄ.ປະເພດສິ່ງປຸກສ້າງ**

ແມ່ນໂຄງສ້າງທີ່ຢູ່ອາໄສເຮືອນ, ຮ້ານຂາຍເຄື່ອງ ແລະ ສິ່ງປຸກສ້າງສຳຮອງປະກອບມີ: ເຮືອນຄົວ, ຫ້ອງນໍ້າ, ເລົ້າເຂົ້າ, ຄອກສັດ, ຮົ້ວ, ກຳແພງ, ສ່າງເກັບເຄື່ອງ, ຕູບ, ສາລາ, ຖຽງນາ ແລະ ອື່ນໆ.

**ງ. ປະເພດຕົ້ນໄມ້ ແລະ ຜົນລະປູກ** ໝາຍເຖິງ ຕົ້ນໄມ້ຊະນິດຕ່າງໆ ແລະ ຜົນລະປູກ ທີ່ເຈົ້າຂອງໄດ້ປູກ ແລະ ນຳໃຊ້ປະໂຫຍດເຊັ່ນ: ຕົ້ນໄມ້ໃຫ້ໝາກ ແລະ ຕົ້ນໄມ້ອຸດສາຫະກຳ. ນອກນັ້ນ, ມີພືດຢືນຕົ້ນ ຊຶ່ງເປັນພືດທີ່ໃຫ້ຜົນຜະລິດ ຫຼັງອາຍຸໄດ້ 6 ເດືອນຂຶ້ນໄປ ແລະ ເກັບຜົນຜະລິດບໍ່ເກີນ 2 ປີ.

## ມາດຕາ 8 ຮູບແບບຜົນກະທົບຕໍ່ຊັບສິນ

ການຈັດຕັ້ງປະຕິບັດໂຄງການ ຈະມີຜົນກະທົບໂດຍກົງຕໍ່ຊັບສິນໃນສອງຮູບແບບຄື:

1. **ຜົນກະທົບແບບຖາວອນ:** ແມ່ນຜົນກະທົບຕໍ່ຊັບສິນທີ່ນອນໃນເຂດຂອງໂຄງການແບບຖາວອນ, ຊັບສິນທີ່ຖືກຜົນກະທົບແບບຖາວອນຈະສູນເສຍສິດນຳໃຊ້ຢ່າງຖາວອນ ໂດຍຈະໄດ້ມອບສິດການນຳໃຊ້ໃຫ້ກັບເຈົ້າຂອງໂຄງການເປັນຜູ້ນຳໃຊ້ແບບຖາວອນ;

2. **ຜົນກະທົບແບບຊົ່ວຄາວ:** ແມ່ນຜົນກະທົບຄ່າເສຍໂອກາດຈາກການນຳໃຊ້ພື້ນທີ່ໃນໄລຍະການກໍ່ສ້າງເທົ່ານັ້ນພາຍຫຼັງຈາກສຳເລັດການກໍ່ສ້າງໂຄງານການ ເຈົ້າຂອງໂຄງການຈະຕ້ອງໄດ້ປັບປຸງໃຫ້ຢູ່ໃນສະພາບເດີມ, ສາມາດນຳໃຊ້ໄດ້ ແລະ ສົ່ງຄືນເຈົ້າຂອງເດີມສືບຕໍ່ນຳໃຊ້.

## ມາດຕາ 9 ປະເພດຂອງຜູ້ໄດ້ຮັບຜົນກະທົບ

ຜູ້ໄດ້ຮັບຜົນກະທົບຈາກໂຄງການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ຊຸມຊົນ, ຊັບສິນລວມຂອງລັດ ທີ່ໄດ້ຮັບຜົນກະທົບຈາກກິດຈະກຳຂອງໂຄງການ ຊຶ່ງມີຫຼາຍລະດັບທີ່ແຕກຕ່າງກັນດັ່ງນີ້:

1. **ປະເພດທີ 1 ຜູ້ຖືກຈັດສັນຍົກຍ້າຍ** ໝາຍເຖິງຜູ້ທີ່ໄດ້ຮັບຜົນກະທົບຕໍ່ທີ່ຢູ່ອາໄສຊຶ່ງເນື້ອທີ່ຍັງເຫຼືອແມ່ນບໍ່ພຽງພໍໃນການຢູ່ອາໄສຕໍ່ໄປໄດ້ ຈຳເປັນຕ້ອງຍົກຍ້າຍອອກຈາກບ່ອນເດີມໄປຢູ່ບ່ອນໃໝ່;

2. **ປະເພດທີ 2 ຜູ້ໄດ້ຮັບຜົນກະທົບລະດັບຮຸນແຮງ** ໝາຍເຖິງຜູ້ທີ່ໄດ້ຮັບຜົນກະທົບຕໍ່ຊັບສິນເທົ່າກັບ ຫຼື ຫຼາຍກວ່າ 10% ຂຶ້ນໄປຂອງຈຳນວນຊັບສິນທັງໝົດທີ່ເຂົາເຈົ້າຖືຄອງໃນປະຈຸບັນ;

3. **ປະເພດທີ 3 ຜູ້ຖືກກະທົບລະດັບເບົາ** ໝາຍເຖິງຜູ້ໄດ້ຮັບຜົນກະທົບເບົາບາງ, ຜູ້ໄດ້ຮັບຜົນກະທົບຕໍ່ຊັບສິນໜ້ອຍກວ່າ 10% ລົງມາຂອງຈຳນວນຊັບສິນທັງໝົດທີ່ເຂົາເຈົ້າຖືຄອງໃນປະຈຸບັນ;

4. **ປະເພດທີ 4: ຄອບຄົວດ້ອຍໂອກາດ** ໝາຍເຖິງຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການເປັນຄອບຄົວທີ່ມີຄວາມສ່ຽງທີ່ຈະທຸກຍາກຕື່ມ ອັນເນື່ອງມາຈາກບັນຫາການປ່ຽນແປງທາງສະພາບແວດລ້ອມ ແລະ ການປັບຕົວຕໍ່ຜົນກະທົບ, ຄອບຄົວດ້ອຍໂອກາດຕ້ອງນອນໃນ 5 ເງື່ອນໄຂດັ່ງຕໍ່ໄປນີ້:

- **ເປັນຄອບຄົວດ້ອຍໂອກາດ:** ມີລາຍຮັບຕໍ່າກວ່າເສັ້ນລະດັບຄວາມທຸກຍາກຂອງຊາດທີ່ກຳນົດໄວ້ໃນເຂດຊົນນະບົດ 180.000 ກີບ/ຄົນ/ເດືອນ, ໃນເຂດເທດສະບານ 240.000 ກີບ/ຄົນ/ເດືອນ;

- **ຜູ້ຍິງເປັນຫົວໜ້າຄອບຄົວ:** ແມ່ຮ້າງ, ແມ່ໝ້າຍ, ແມ່ຍິງໂສດທີ່ບໍ່ທັນໄດ້ແຕ່ງງານອາດຈະຢູ່ຄົນດຽວ ຫຼື ຢູ່ກັບລູກຫຼານ;

- **ຄອບຄົວຜູ້ເຖົ້າ:** ທີ່ມີອາຍຸເກີນ 65 ປີຂຶ້ນໄປ ທີ່ບໍ່ມີຜູ້ດູແລ;

- **ຄອບຄົວຄົນພິການ:** ຄອບຄົວໃດທີ່ມີສະມາຊິກຄອບຄົວເປັນຄົນພິການຢູ່ນໍາຖືກວ່າຕົກໃນມາດຖານເປັນຄອບຄົວດ້ອຍໂອກາດ, ຖ້າແມ່ນສະມາຊິກເປັນຄົນພິການ ກໍ່ຈະໄດ້ຮັບພິຈາລະນາການຊ່ວຍເຫຼືອສະເພາະຜູ້ພິການຕາມນະໂຍບາຍ.

## ໝວດທີ 3
## ນະໂຍບາຍ, ເງື່ອນໄຂ ແລະ ຮູບແບບການທົດແທນຄ່າເສຍຫາຍ

### ມາດຕາ 10 ນະໂຍບາຍການທົດແທນ

ຜູ້ທີ່ໄດ້ຮັບຜົນກະທົບແມ່ນຈະມີນະໂຍບາຍການທົດແທນຄ່າເສຍຫາຍດັ່ງນີ້:

1. ໃນກໍລະນີຜູ້ທີ່ໄດ້ຮັບຜົນກະທົບກ່ຽວກັບ ສິດນໍາໃຊ້ຊັບສິນທີ່ດິນ, ຢ່າງຖືກຕ້ອງຕາມກົດໝາຍ ສູນເສຍຊັບສິນທີ່ດິນທັງໝົດ ຫຼື ສ່ວນໃຫຍ່, ສ່ວນເນື້ອທີ່ດິນທີ່ຍັງເຫຼືອບໍ່ສາມາດນໍາໃຊ້ໄດ້ອີກເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດ;

2. ໃນກໍລະນີຜູ້ໄດ້ຮັບຜົນກະທົບກ່ຽວກັບສິດນໍາໃຊ້ຊັບສິນທີ່ດິນ, ຢ່າງຖືກຕ້ອງຕາມກົດໝາຍຫາກໄດ້ສູນເສຍຊັບສິນທີ່ດິນພຽງສ່ວນໃດໜຶ່ງ, ສ່ວນຊັບສິນທີ່ດິນທີ່ຍັງເຫຼືອສາມາດນໍາໃຊ້ໄດ້ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍໃນສ່ວນທີ່ໄດ້ສູນເສຍນັ້ນດ້ວຍມູນຄ່າເປັນເງິນທີ່ຄິດໄລ່ໄວ້, ສ່ວນຊັບສິນທີ່ດິນ ທີ່ຍັງເຫຼືອທີ່ສາມາດນໍາໃຊ້ໄດ້ແມ່ນຕ້ອງໄດ້ໃຫ້ຜູ້ທີ່ໄດ້ຮັບຜົນກະທົບໄດ້ຮັບເອກະສານກ່ຽວກັບສິດນໍາໃຊ້ຊັບສິນທີ່ດິນຕອນນັ້ນຕໍ່ໄປຢ່າງຄົບຖ້ວນ ໂດຍເຈົ້າຂອງໂຄງການຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆທັງໝົດທີ່ເກີດຂຶ້ນຈາກການປ່ຽນແປງສິດນໍາໃຊ້ທີ່ດິນ;

3. ໃນກໍລະນີສູນເສຍສິ່ງປຸກສ້າງທັງໝົດ ຫຼື ບາງສ່ວນ ເຈົ້າຂອງໂຄງການ ຕ້ອງໄດ້ທົດແທນຄ່າເສຍຫາຍດ້ວຍມູນຄ່າປ່ຽນແທນຂອງສິ່ງປຸກສ້າງດັ່ງກ່າວໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບທີ່ເປັນເຈົ້າຂອງກໍາມະສິດຂອງສິ່ງປຸກສ້າງນັ້ນ ໂດຍບໍ່ມີການຫັກຄ່າຫຼຸ້ຍຫ້ຽນ ຫຼື ບໍ່ມີການຫຼຸດຄ່າທົດແທນສໍາລັບວັດຖຸທີ່ຍັງເຫຼືອ;

4. ໃນກໍລະນີການຂໍນໍາໃຊ້ທີ່ດິນ ຫຼື ສິ່ງປຸກສ້າງບາງສ່ວນຢູ່ນອກໂຄງການ, ຕ້ອງໄດ້ເຮັດບົດບັນທຶກສັນຍາເຊົ່ານໍາເຈົ້າຂອງຊັບສິນ ພ້ອມທັງຮັບປະກັນໃນການສົ່ງຄືນທີ່ດິນ ຫຼື ສິ່ງປຸກສ້າງໃຫ້ແກ່ເຈົ້າຂອງຊັບສິນໃນສະພາບເດີມ ຫຼື ການຕົກລົງເຫັນດີກັບເຈົ້າຂອງດິນ;

5. ກໍລະນີສູນເສຍຕົ້ນໄມ້ ຫຼື ລາຍຮັບ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍຕາມລະບຽບການ ທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້;

6. ການປະຕິບັດການທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບໃນທຸກໆກໍລະນີເຈົ້າຂອງໂຄງການຕ້ອງໄດ້ປະສານສົມທົບກັບຄະນະຮັບຜິດຊອບການທົດແທນຄ່າເສຍຫາຍຂັ້ນແຂວງເພື່ອຕິດຕາມກວດກາ, ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຕາມແຜນທົດແທນຄ່າເສຍຫາຍ;

7. ຊັບສິນທີ່ມີຂໍ້ຂັດແຍ່ງກັບບຸກຄົນອື່ນ ຫຼື ອົງການຈັດຕັ້ງໃດໜຶ່ງ ຈະໄດ້ເຮັດການບັນທຶກຕົວເລກຜົນກະທົບຄ່າເສຍຫາຍໄວ້ ພາຍຫຼັງທີ່ສໍາເລັດການແກ້ໄຂຂໍ້ຂັດແຍ່ງ ຈຶ່ງໃຫ້ສະເໜີຂໍການທົດແທນ;

8. ການຄິດໄລ່ລາຄາຫົວໜ່ວຍທົດແທນຄ່າເສຍຫາຍແມ່ນ ໄດ້ກໍານົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້;

9. ເງິນຊ່ວຍເຫຼືອພິເສດ: ຄອບຄົວທີ່ມີເງື່ອນໄຂໄດ້ຮັບເງິນຊ່ວຍເຫຼືອພິເສດ ປະກອບມີຄື: ຄອບຄົວທີ່ຖືກຍົກຍ້າຍເຮືອນ, ຍົກຍ້າຍຮ້ານບໍລິການຕ່າງໆ ແລະ ຄອບຄົວຜູ້ດ້ອຍໂອກາດ ໃນອັດຕາ 160.000 ກີບ ຕໍ່ເດືອນ ຕໍ່ຄົນ ພາຍໃນໄລຍະການຍົກຍ້າຍຕົວຈິງ;

10. ຮ້ານຄ້າ ແລະ ຮ້ານບໍລິການຈະໄດ້ຮັບການທົດແທນລາຍໄດ້ໃນຊ່ວງໄລຍະດຳເນີນກໍ່ສ້າງໂຄງການທີ່ບໍ່ສາມາດເປີດໃຫ້ບໍລິການໄດ້ ຊຶ່ງຈະມີການຄິດໄລ່ຕາມໄລຍະເວລາການປິດຮ້ານຕົວຈິງ;

11. ທໍ່ລະບາຍນ້ຳ ທາງໂຄງການຈະບໍ່ໄດ້ຮັບການທົດແທນ, ເນື່ອງຈາກທາງໂຄງການອອກແບບຮ່ອງລະບາຍນ້ຳ ພ້ອມກໍ່ສ້າງທົດແທນຄືນ ແລະ ສຳລັບທໍ່ລະບາຍນ້ຳເກົ່າແມ່ນມອບຄືນໃຫ້ເຈົ້າຂອງເດີມ;

12. ພືດໄລຍະສັ້ນ, ໄມ້ດອກ ແລະ ໄມ້ປະດັບ ທີ່ນອນໃນເຂດສະຫງວນຂອງທາງຫຼວງແຫ່ງຊາດແມ່ນບໍ່ໄດ້ຮັບການທົດແທນ;

13. ສານພະພູມ ສອນບຸກຄົນ ທີ່ນອນໃນເຂດສະຫງວນຂອງທາງຫຼວງແຫ່ງຊາດ, ປ້າຍໂຄສະນາ ທີ່ບໍ່ໄດ້ຮັບອານຸຍາດກໍ່ສ້າງຈາກພາກລັດ ແມ່ນບໍ່ໄດ້ຮັບການທົດແທນ.

**ມາດຕາ 11 ເງື່ອນໄຂການຂຶ້ນບັນຊີຊັບສິນຕໍ່ຜູ້ທີ່ໄດ້ຮັບຜົນກະທົບ**

ເງື່ອນໄຂການຂຶ້ນບັນຊີຊັບສິນຕໍ່ຜູ້ໄດ້ຮັບຜົນກະທົບມີດັ່ງນີ້:

1. ຕ້ອງແມ່ນຊັບສິນທີ່ນອນຢູ່ໃນຂອບເຂດຂອງໂຄງການປັບປຸງທາງຫຼວງແຫ່ງຊາດ 2W ແລະ 2E ພາຍໃຕ້ໂຄງການ ພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ (SEARECC).

2. ຕ້ອງແມ່ນຊັບສິນທີ່ດິນທີ່ມີເອກະສານຢັ້ງຢືນສິດນຳໃຊ້ທີ່ດິນ ແລະ ສິດໃຊ້ຊັບສິນທີ່ດິນຕາມປະເພນີຢ່າງຖືກຕ້ອງຕາມກົດໝາຍ;

3. ສຳລັບຕົ້ນໄມ້ຕ້ອງແມ່ນຕົ້ນໄມ້ທີ່ມີການຢັ້ງຢືນຈາກເຈົ້າຂອງຜູ້ຄອບຄອງພ້ອມດ້ວຍພະຍານຈາກເຈົ້າຂອງ ທີ່ດິນອ້ອມຂ້າງ, ອຳນາດການປົກຄອງບ້ານ ແລະ ວິຊາການເກັບຂໍ້ມູນ;

4. ສຳລັບຜົນລະປູກຕ້ອງມີຮ່ອງຮອຍຂອງການຜະລິດເພື່ອເປັນຫຼັກຖານ;

5. ສຳລັບສິ່ງປຸກສ້າງຕ້ອງແມ່ນສິ່ງປຸກສ້າງທີ່ສາມາດນຳໃຊ້ໄດ້.

**ມາດຕາ 12 ເງື່ອນໄຂຮັບການທົດແທນຕໍ່ຊັບສິນໄດ້ຮັບຜົນກະທົບ**

ຊັບສິນທີ່ໄດ້ຮັບຜົນກະທົບຈາກການພັດທະນາໂຄງການທີ່ມີສິດໄດ້ຮັບການທົດແທນ ມີຄືດັ່ງນີ້:

1. ຕ້ອງແມ່ນຊັບສິນ ທີ່ມີກ່ອນມື້ປະກາດເລີ່ມຕົ້ນໂຄງການ ເລີ່ມແຕ່ທ້າຍ ເດືອນກັນຍາ 2022.

2. ໄດ້ຮັບການຂຶ້ນບັນຊີ ແລະ ຮັບຮອງຈາກຄະນະກຳມະການທີ່ກ່ຽວຂ້ອງ.

3. ສຳລັບຊັບສິນທີ່ເກີດຂຶ້ນພາຍຫຼັງ ມື້ປະກາດເລີ່ມຕົ້ນໂຄງການ ຫຼື ບໍ່ຜ່ານການຮັບຮອງຈາກຄະນະກຳມະການ ຈະບໍ່ໄດ້ຮັບພິຈາລະນາທົດແທນ.

**ມາດຕາ 13 ເງື່ອນໄຂການເບີກຈ່າຍເງິນທົດແທນຄ່າເສຍຫາຍ**

ເງື່ອນໄຂການເບີກຈ່າຍເງິນທົດແທນຄ່າເສຍຫາຍມີດັ່ງນີ້:

ການທົດແທນຜົນກະທົບເປັນຕົ້ນແມ່ນທີ່ດິນ, ສິ່ງປຸກສ້າງ, ຕົ້ນໄມ້ກິນໝາກ ແລະ ຕົ້ນໄມ້ອຸດສາຫະກຳແມ່ນພາຍຫລັງການຕີລາຄາ, ຄິດໄລ່ຂອງຄະນະກຳມະການໄກ່ເກ່ຍຍົກຍ້າຍສິ່ງກີດຂວາງ ແລະ ຄະນະຮັບຜິດຊອບຄົ້ນຄວ້າສ້າງລາຄາຫົວໜ່ວຍທົດແທນຄ່າເສຍຫາຍຜົນກະທົບຕາມແລວທາງຂອງ ໂຄງການປັບປຸງທາງຫຼວງແຫ່ງຊາດ 2W ແລະ 2E ພາຍໃຕ້ ໂຄງການ ພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ ແລະ ເປັນເອກະພາບກັບເຈົ້າຂອງກຳມະສິດ ຜູ້ທີ່ໄດ້ຮັບຜົນກະທົບ ແລະ ສະເໜີໃຫ້ປະທານຄະນະກຳມະການໄກ່ເກ່ຍ ຍົກຍ້າຍສິ່ງກີດຂວາງ ແລະ ຄະນະຮັບຜິດຊອບຄົ້ນຄວ້າສ້າງລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ສະເພາະຂອງໂຄງການທີ່ຖືກຮັບຮອງໂດຍເຈົ້າແຂວງອຸດົມໄຊ;

ມູນຄ່າຂອງການທົດແທນຄ່າເສຍຫາຍທັງໝົດ, ຈະຕ້ອງຈ່າຍເງິນທົດແທນເປັນເງິນສົດຜ່ານລະບົບບັນຊີທະນາຄານ ຊຶ່ງແຕ່ລະຄອບຄົວຕ້ອງໄດ້ເປີດບັນຊີທະນາຄານ, ການໂອນແຕ່ລະຄັ້ງຈະໄດ້ຮັບການກວດກາຄວາມຖືກຕ້ອງຈາກຄະນະກຳມະການກ່ອນຈະມີການໂອນ. ທະນາຄານທີ່ໂອນເງິນໃຫ້ແກ່ຜູ້ໄດ້ຮັບຜົນກະທົບຕ້ອງແມ່ນທະນາຄານທີ່ຢູ່ໃກ້ບ້ານຂອງເຂົາເຈົ້າ ເພື່ອໃຫ້ມີຄວາມສະດວກໃນການເຄື່ອນໄຫວທາງດ້ານການເງິນ

**ມາດຕາ 14 ແຫຼ່ງທຶນຊຳລະ**

ງົບປະມານໃນການຊຳລະ ແມ່ນນຳໃຊ້ງົບປະມານ ສົມທົບຂອງລັດຖະບານໃນການຊຳລະຄ່າທົດແທນທີ່ໄດ້ຮັບຜົນກະທົບຈາກ ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ ຕາມຄວາມຮັບຜິດຊອບ ແລະ ການຕົກລົງຂອງລັດຖະບານ.

## ໝວດທີ 4
## ຫຼັກການກຳນົດ ແລະ ການຄິດໄລ່ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ

**ມາດຕາ 15 ຫຼັກການກຳນົດ**

ຫຼັກການກຳນົດລາຄາຫົວໜ່ວຍທົດແທນ ແມ່ນໄດ້ຈາກການປະເມີນດັດສະນີອັດຕາການເໜັງຕີງຂອງເຄື່ອງອຸປະໂພກ-ບໍລິໂພກ (CPI ) ປະຈຳປີ 2022 ແລະ 10 ເດືອນຂອງປີ 2023 ໂດຍອີງຕາມການກຳນົດຂອງທະນະຄານແຫ່ງ ສປປ ລາວ (ອັດຕາເງິນເຟີ້ 29%) ບວກກັບ ລາຄາຫົວໜ່ວຍທົດແທນ ຂໍ້ຕົກລົງເລກທີ 112/ອຊ ລົງວັນທີ 24 ກຸມພາ 2022.

**ມາດຕາ 16 ຫຼັກການຄິດໄລ່ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ**

**ກ. ປະເພດດິນກະສິກຳ**

ປະເພດດິນກະສິກຳ ມີພຽງແຕ່ 2 ປະເພດຄື: ດິນນາ ແລະ ດິນສວນ

ກ1. ດິນນາ: ຄ່າທົດແທນ = (ເນື້ອທີ່ດິນສູນເສຍ x ລາຄາດິນແຕ່ລະເຂດ) + ຄ່າທົດແທນຜົນຜະລິດ

- ຄ່າທົດແທນຜົນຜະລິດ = ສະມັດຕະພາບຜົນຜະລິດ (ໂຕນ/ປີ/ເຮັກຕາ) x ເນື້ອທີ່ສູນເສຍ x ລາຄາເຂົ້າເປືອກທ້ອງຕະຫຼາດ (ກີບ/ໂຕນ) x 5 (ປີ), ການຄິດໄລ່ແມ່ນໄດ້ຖືເອົາສະມັດຕະພາບ ແລະ ລາຄາໃນທ້ອງຕະຫຼາດເປັນພື້ນຖານ.

ກ2. ດິນສວນ: ຄ່າທົດແທນ = (ເນື້ອທີ່ດິນທີ່ສູນເສຍ x ລາຄາດິນແຕ່ລະເຂດ) + ຄ່າທົດແທນຕົ້ນໄມ້, ຜົນລະປູກ.

**ຂ. ປະເພດດິນປຸກສ້າງ**

ປະເພດດິນປຸກສ້າງ: ຄ່າທົດແທນ = (ເນື້ອທີ່ທີ່ສູນເສຍ x ລາຄາດິນແຕ່ລະເຂດ) + ຄ່າທົດແທນສິ່ງປຸກສ້າງ (ຖ້າມີສິ່ງປຸກສ້າງ).

**ຄ. ປະເພດສິ່ງປຸກສ້າງ**

ສິ່ງປຸກສ້າງທີ່ຖືກຜົນກະທົບ ຈະຄິດໄລ່ເປັນເນື້ອທີ່, ແຕ່ບໍ່ໄດ້ຄິດໄລ່ມູນຄ່າຫຼຸ້ຍຫ້ຽນເຂົ້ານຳ.

ປະເພດສິ່ງປຸກສ້າງ: ທີ່ບໍ່ມີໃນຂໍ້ຕົກລົງສະບັບນີ້ແມ່ນເອົາຕາມເອກະສານຄົ້ນຄວ້າການຄິດໄລ່ສັງລວມລາຄາຫົວໜ່ວຍດ້ານການກໍ່ສ້າງເຄຫາສະຖານ ແລະ ການກໍ່ສ້າງນ້ຳປະປາ ສະບັບລົງວັນທີ 06 ຕຸລາ 2021, ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງອຸດົມໄຊ.

**ງ. ປະເພດຕົ້ນໄມ້ ແລະ ຜົນລະປູກ**

ປະເພດຕົ້ນໄມ້ຄິດໄລ່ຕາມອາຍຸ ຊຶ່ງປະກອບດ້ວຍ ຕົ້ນໄມ້ອຸດສາຫະກຳ, ຕົ້ນໄມ້ໃຫ້ໝາກ, ຜົນລະປູກ ແລະ ຕົ້ນໄມ້ປະດັບ.

ງ1. ການຄິດໄລ່ປະເພດຕົ້ນໄມ້: ຄ່າທົດແທນ = (ຄ່າບຸກເບີກພື້ນທີ່ + ເບ້ຍໄມ້) + (ຄ່າປົວລະບັດຮັກສາ x ຈຳນວນປີທີ່ປົວລະບັດຮັກສາ).

ງ2. ຜົນລະປູກ(ພືດລົ້ມລຸກ): ຈະບໍ່ມີການທົດແທນເພາະເວລາກ່ອນຈະລົງມືດຳເນີນການກໍ່ສ້າງ ທາງໂຄງການ ແລະ ບໍລິສັດຜູ້ຮັບເໝົາຈະໄດ້ແຈ້ງໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຊາບກ່ອນຢ່າງໜ້ອຍ 6 ເດືອນ;

ກໍລະນີບໍ່ໄດ້ແຈ້ງ, ໂຄງການຈຳເປັນຕ້ອງເຂົ້າໄປນຳໃຊ້ພື້ນທີ່ ໃນເວລາທີ່ພືດຍັງບໍ່ທັນໄດ້ເກັບກ່ຽວ ໂຄງການຕ້ອງຈ່າຍຄ່າທົດແທນພືດ ທີ່ເສຍຫາຍຕາມການປະເມີນຂອງຄະນະກຳມະການ.

**ມາດຕາ 17 ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ**

ລາຄາຫົວໜ່ວຍທົດແທນແມ່ນກຳນົດມູນຄ່າຕໍ່ກັບຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການ ໂດຍແຍກເປັນ 4 ປະເພດ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງ 1 ລາຍລະອຽດການກຳນົດຫົວໜ່ວຍລາຄາດິນກະສິກຳ

| ລ/ດ | ເນື້ອໃນລາຍການ | | ຫົວໜ່ວຍ | ລາຄາທີ່ດິນ (ກີບ) | ໝາຍເຫດ |
|---|---|---|---|---|---|
| **ກ** | **ປະເພດດິນກະສິກຳ** | | | | |
| ກ1 | ດິນນາ | | | | |
| | ເຂດເມືອງໄຊ | | | | |
| | ກ1.1 | ເຂດໃຈກາງເມືອງ | ມ$^2$ | 134.393 | |
| | ກ1.2 | ເຂດອ້ອມຂ້າງໃຈກາງເມືອງ | ມ$^2$ | 108.360 | |
| | ກ1.3 | ເຂດຊານເມືອງ | ມ$^2$ | 54.567 | |
| | ເຂດເມືອງຫຼາ | | | | |
| | ກ1.4 | ເຂດໃຈກາງເມືອງ | ມ$^2$ | 74.498 | |
| | ກ1.5 | ເຂດອ້ອມຂ້າງໃຈກາງເມືອງ | ມ$^2$ | 60.372 | |
| | ກ1.6 | ເຂດຊານເມືອງ | ມ$^2$ | 51.084 | |
| | ເຂດເມືອງແບງ | | | | |
| | ກ1.7 | ເຂດໃຈກາງເມືອງ | ມ$^2$ | 74.498 | |
| | ກ1.8 | ເຂດອ້ອມຂ້າງໃຈກາງເມືອງ | ມ$^2$ | 60.372 | |
| | ກ1.9 | ເຂດຊານເມືອງ | ມ$^2$ | 52.245 | |
| | ເຂດເມືອງຮຸນ | | | | |
| | ກ1.10 | ເຂດໃຈກາງເມືອງ | ມ$^2$ | 78.223 | |
| | ກ1.11 | ເຂດອ້ອມຂ້າງໃຈກາງເມືອງ | ມ$^2$ | 68.370 | |
| | ກ1.12 | ເຂດຊານເມືອງ | ມ$^2$ | 57.599 | |
| | ເຂດເມືອງປາກແບງ | | | | |
| | ກ1.13 | ເຂດໃຈກາງເມືອງ | ມ$^2$ | 75.379 | |
| | ກ1.14 | ເຂດອ້ອມຂ້າງໃຈກາງເມືອງ | ມ$^2$ | 58.050 | |
| | ກ1.15 | ເຂດຊານເມືອງ | ມ$^2$ | 51.084 | |
| ກ2 | ດິນສວນ | | | | |
| | ເຂດເມືອງໄຊ | | | | |
| | ກ2.1 | ເຂດໃຈກາງເມືອງ | ມ$^2$ | 46.440 | |
| | ກ2.2 | ເຂດອ້ອມຂ້າງໃຈກາງເມືອງ | ມ$^2$ | 36.120 | |
| | ກ2.3 | ເຂດຊານເມືອງ | ມ$^2$ | 21.930 | |
| | ເຂດເມືອງຫຼາ | | | | |
| | ກ2.4 | ເຂດໃຈກາງເມືອງ | ມ$^2$ | 20.318 | |
| | ກ2.5 | ເຂດອ້ອມຂ້າງໃຈກາງເມືອງ | ມ$^2$ | 11.610 | |
| | ກ2.6 | ເຂດຊານເມືອງ | ມ$^2$ | 9.224 | |

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາທີ່ດິນ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| | ເຂດເມືອງແບງ | | | | | |
| | | ກ2.7 | ເຂດໃຈກາງເມືອງ | $m^2$ | 20.318 | |
| | | ກ2.8 | ເຂດອ້ອມຂ້າງໃຈກາງເມືອງ | $m^2$ | 13.932 | |
| | | ກ2.9 | ເຂດຊານເມືອງ | $m^2$ | 10.062 | |
| | ເຂດເມືອງຮຸນ | | | | | |
| | | ກ2.10 | ເຂດໃຈກາງເມືອງ | $m^2$ | 24.123 | |
| | | ກ2.11 | ເຂດອ້ອມຂ້າງໃຈກາງເມືອງ | $m^2$ | 22.059 | |
| | | ກ2.12 | ເຂດຊານເມືອງ | $m^2$ | 16.254 | |
| | ເຂດເມືອງປາກແບງ | | | | | |
| | | ກ2.13 | ເຂດໃຈກາງເມືອງ | $m^2$ | 19.737 | |
| | | ກ2.14 | ເຂດອ້ອມຂ້າງໃຈກາງເມືອງ | $m^2$ | 10.320 | |
| | | ກ2.15 | ເຂດຊານເມືອງ | $m^2$ | 9.933 | |

ຕາຕະລາງ 2 ລາຍລະອຽດການກຳນົດຫົວໜ່ວຍລາຄາທີ່ດິນປຸກສ້າງ

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາທີ່ດິນ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| **ຂ** | **ປະເພດດິນປຸກສ້າງ** | | | | | |
| ຂ1 | ດິນປຸກສ້າງ | | | | | |
| | ເຂດເມືອງໄຊ | | | | | |
| | | ຂ1.1 | ເຂດໃຈກາງເມືອງ | $m^2$ | 986.850 | |
| | | ຂ1.2 | ເຂດອ້ອມຂ້າງໃຈກາງເມືອງ | $m^2$ | 548.250 | |
| | | ຂ1.3 | ເຂດຊານເມືອງ | $m^2$ | 203.304 | |
| | ເຂດເມືອງຫຼາ | | | | | |
| | | ຂ1.4 | ເຂດໃຈກາງເມືອງ | $m^2$ | 283.800 | |
| | | ຂ1.5 | ເຂດອ້ອມຂ້າງໃຈກາງເມືອງ | $m^2$ | 208.980 | |
| | | ຂ1.6 | ເຂດຊານເມືອງ | $m^2$ | 131.064 | |
| | ເຂດເມືອງແບງ | | | | | |
| | | ຂ1.7 | ເຂດໃຈກາງເມືອງ | $m^2$ | 336.690 | |
| | | ຂ1.8 | ເຂດອ້ອມຂ້າງໃຈກາງເມືອງ | $m^2$ | 232.200 | |
| | | ຂ1.9 | ເຂດຊານເມືອງ | $m^2$ | 139.256 | |
| | ເຂດເມືອງຮຸນ | | | | | |
| | | ຂ1.10 | ເຂດໃຈກາງເມືອງ | $m^2$ | 348.300 | |
| | | ຂ1.11 | ເຂດອ້ອມຂ້າງໃຈກາງເມືອງ | $m^2$ | 232.200 | |
| | | ຂ1.12 | ເຂດຊານເມືອງ | $m^2$ | 151.704 | |
| | ເຂດເມືອງປາກແບງ | | | | | |
| | | ຂ1.13 | ເຂດໃຈກາງເມືອງ | $m^2$ | 348.300 | |

| ລ/ດ | | ເນື້ອໃນລາຍການ | | ຫົວໜ່ວຍ | ລາຄາທີ່ດິນ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| | | ຂ1.14 | ເຂດອ້ອມຂ້າງໃຈກາງເມືອງ | $ມ^2$ | 208.980 | |
| | | ຂ1.15 | ເຂດຊານເມືອງ | $ມ^2$ | 119.970 | |
| | **ປະເພດດິນປ່າຊ້າ ແລະ ປ່າສັກສິດ** | | | | | |
| | | ຂ1.16 | ປ່າຊ້າ | ແຫ່ງ | 9.030.000 | |
| | | ຂ1.17 | ຍ້າຍປ່າຊ້ານ້ອຍ | ແຫ່ງ | 19.350.000 | |
| | | ຂ1.18 | ຍ້າຍປ່າຊ້າກາງ | ແຫ່ງ | 38.700.000 | |
| | | ຂ1.19 | ຍ້າຍປ່າຊ້າໃຫຍ່ | ແຫ່ງ | 77.400.000 | |
| | | ຂ1.20 | ຂຸມຝັງສົບ | ຂຸມ | 9.030.000 | |

- ສໍາລັບທີ່ດິນວັດທະນະທໍາ, ດິນ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ດິນໂຍທາທິການ ແລະ ຂົນສົ່ງ ແລະ ດິນອຸດສາຫະກໍາ ໃນເມື່ອຖືກຜົນກະທົບຈາກໂຄງການປັບປຸງທາງຫຼວງແຫ່ງຊາດ 2W ແລະ 2E ພາຍໃຕ້ ໂຄງການ ພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ ແມ່ນ ໃຫ້ປະຕິບັດການທົດແທນຕາມການນໍາໃຊ້ຕົວຈິງເຊັ່ນ: ນໍາໃຊ້ເປັນດິນປຸກສ້າງ ຫຼື ດິນກະສິກໍາ.

- ການຈ່າຍຄ່າປົວແປງທາງສາສະໜາໂດຍສະເພາະປ່າຊ້າ, ປ່າສັກສິດ ແລະ ຂຸມຝັງສົບ ພາຍຫຼັງບ້ານທີ່ໄດ້ຮັບ ຜົນກະທົບ ແລະ ໄດ້ຮັບຄ່າທົດແທນແລ້ວພັນທະຕ່າງໆກ່ຽວກັບວຽກງານທາງດ້ານຮີດຄອງສາສະໜາດັ່ງກ່າວທີ່ມີ ລະຫວ່າງບ້ານ ແລະ ໂຄງການພັດທະນາຖືວ່າສິ້ນສຸດ.

ຕາຕະລາງ 3 ລາຍລະອຽດການກໍານົດຫົວໜ່ວຍລາຄາປະເພດສິ່ງປຸກສ້າງ

| ລ/ດ | | ເນື້ອໃນລາຍການ | | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| **ຄ** | **ປະເພດສິ່ງປຸກສ້າງ** | | | | | |
| | ຄ1 | ເຮືອນຕູບ | | | | |
| | | ຄ1.1 | ໂຄງສ້າງໄມ້ກົມ, ຝາໄມ້ປ່ອງ, ມຸງຫຍ້າ ຫຼື ມຸງຝ້າ | $ມ^2$ | 412.800 | |
| | | ຄ1.2 | ໂຄງສ້າງໄມ້ກົມ, ຝາໄມ້ປ່ອງ, ມຸງສັງກະສີ | $ມ^2$ | 451.500 | |
| | | ຄ1.3 | ໂຄງສ້າງໄມ້ກົມ, ຝາໄມ້ປ່ອງ, ມຸງກະເບື້ອງ | $ມ^2$ | 490.200 | |
| | | ຄ1.4 | ໂຄງສ້າງໄມ້ລ່ຽມ, ຝາແປ້ນ, ມຸງຫຍ້າ ຫຼື ມຸງຝ້າ | $ມ^2$ | 464.400 | |
| | | ຄ1.5 | ໂຄງສ້າງໄມ້ລ່ຽມ, ຝາແປ້ນ, ມຸງສັງກະສີ | $ມ^2$ | 516.000 | |
| | | ຄ1.6 | ໂຄງສ້າງໄມ້ລ່ຽມ, ຝາແປ້ນ, ມຸງກະເບື້ອງ | $ມ^2$ | 580.500 | |
| | ຄ2 | ເຮືອນຊັ້ນດຽວ | | | | |
| | | ຄ2.1 | ໂຄງສ້າງໄມ້, ຝາແປ້ນ, ມຸງຫຍ້າ | $ມ^2$ | 877.200 | |
| | | ຄ2.2 | ໂຄງສ້າງໄມ້, ຝາແປ້ນ, ມຸງສັງກະສີ | $ມ^2$ | 1.354.500 | |
| | | ຄ2.3 | ໂຄງສ້າງໄມ້, ຝາແປ້ນ, ມຸງກະເບື້ອງ | $ມ^2$ | 2.025.300 | |
| | | ຄ2.4 | ໂຄງສ້າງໄມ້, ຝາແປ້ນ, ມຸງອາລູຊີງ | $ມ^2$ | 1.677.000 | |
| | | ຄ2.5 | ໂຄງສ້າງໄມ້, ຝາກໍ່ດິນຈີ່, ມຸງສັງກະສີ | $ມ^2$ | 2.515.500 | |
| | | ຄ2.6 | ໂຄງສ້າງໄມ້, ຝາກໍ່ດິນຈີ່, ມຸງກະເບື້ອງ | $ມ^2$ | 2.838.000 | |
| | | ຄ2.7 | ໂຄງສ້າງໄມ້, ຝາກໍ່ດິນຈີ່, ມຸງອາລູຊີງ | $ມ^2$ | 2.773.500 | |
| | | ຄ2.8 | ໂຄງສ້າງເບຕົງ, ຝາກໍ່ດິນບ໋ອກ, ມຸງສັງກະສີ | $ມ^2$ | 3.160.500 | |
| | | ຄ2.9 | ໂຄງສ້າງເບຕົງ, ຝາກໍ່ດິນບ໋ອກ, ມຸງກະເບື້ອງ | $ມ^2$ | 3.452.040 | |

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| | | ຄ2.10 | ໂຄງສ້າງເບຕົງ, ຝາກໍ່ດິນບັອກ, ມຸງອາລູຊິງ | ມ$^2$ | 3.289.500 | |
| | | ຄ2.11 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງສັງກະສີ | ມ$^2$ | 3.713.910 | |
| | | ຄ2.12 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງກະເບື້ອງ | ມ$^2$ | 4.128.000 | |
| | | ຄ2.13 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງຊີແພັກ | ມ$^2$ | 4.902.000 | |
| | | ຄ2.14 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງອາລູຊິ້ງ | ມ$^2$ | 4.515.000 | |
| | ຄ3 | ເຮືອນ 2 ຊັ້ນ | | | | |
| | | ຄ3.1 | ເຮືອນຮ້ານ, ປູໄມ້ແປ້ນ, ມຸງສັງກະສີ | ມ$^2$ | 2.128.500 | |
| | | ຄ3.2 | ເຮືອນໄມ້ສອງຊັ້ນ, ມຸງສັງກະສີ | ມ$^2$ | 2.193.000 | |
| | | ຄ3.3 | ເຮືອນໄມ້ສອງຊັ້ນ, ມຸງກະເບື້ອງ | ມ$^2$ | 2.515.500 | |
| | | ຄ3.4 | ເຮືອນໄມ້ສອງຊັ້ນ, ມຸງຊີແພັກ | ມ$^2$ | 2.580.000 | |
| | | ຄ3.5 | ເຮືອນໄມ້ສອງຊັ້ນ, ມຸງອາລູຊິງ | ມ$^2$ | 2.386.500 | |
| | | ຄ3.6 | ເຮືອນລຸ່ມກໍ່, ເທິງໄມ້, ມຸງສັງກະສີ | ມ$^2$ | 2.322.000 | |
| | | ຄ3.7 | ເຮືອນລຸ່ມກໍ່, ເທິງໄມ້, ມຸງກະເບື້ອງ | ມ$^2$ | 2.515.500 | |
| | | ຄ3.8 | ເຮືອນລຸ່ມກໍ່, ເທິງໄມ້, ມຸງຊີແພັກ | ມ$^2$ | 3.225.000 | |
| | | ຄ3.9 | ເຮືອນລຸ່ມກໍ່, ເທິງໄມ້, ອາລູຊິງ | ມ$^2$ | 2.451.000 | |
| | | ຄ3.10 | ເຮືອນກໍ່ 2 ຊັ້ນ, ມຸງສັງກະສີ | ມ$^2$ | 2.709.000 | |
| | | ຄ3.11 | ເຮືອນກໍ່ 2 ຊັ້ນ, ມຸງກະເບື້ອງ | ມ$^2$ | 2.838.000 | |
| | | ຄ3.12 | ເຮືອນກໍ່ 2 ຊັ້ນ, ມຸງຊີແພັກ | ມ$^2$ | 3.483.000 | |
| | | ຄ3.13 | ເຮືອນລາວແບບປະຍຸກ | ມ$^2$ | 4.515.000 | |
| | ຄ4 | ປະເພດເຮືອນຫ້ອງແຖວ | | | | |
| | | ຄ4.1 | ເຮືອນໄມ້ຊັ້ນດຽວ, ມຸງສັງກະສີ | ມ$^2$ | 1.161.000 | |
| | | ຄ4.2 | ເຮືອນໄມ້ຊັ້ນດຽວ, ມຸງກະເບື້ອງ | ມ$^2$ | 1.419.000 | |
| | | ຄ4.3 | ເຮືອນກໍ່ຊັ້ນດຽວ, ມຸງສັງກະສີ | ມ$^2$ | 1.612.500 | |
| | | ຄ4.4 | ເຮືອນກໍ່ຊັ້ນດຽວ, ມຸງກະເບື້ອງ | ມ$^2$ | 1.960.800 | |
| | | ຄ4.5 | ເຮືອນກໍ່ຊັ້ນດຽວ, ມຸງຊີແພັກ | ມ$^2$ | 2.838.000 | |
| | | ຄ4.6 | ເຮືອນກໍ່ຊັ້ນດຽວ, ມຸງອາລູຊິງ | ມ$^2$ | 1.870.500 | |
| | ຄ5 | ເຮືອນຄົວ, ເທີບເຮືອນ, ຊານເຮືອນ, ບ່ອນຈອດລົດ, ຖຽງນາ, ຮ້ານເຟືອງ, ຄອກສັດ, ຮ້ານຂາຍເຄື່ອງ, ເຮືອນໂປ້ມນ້ຳ | | | | |
| | | ຄ5.1 | ໂຄງໄມ້ກົມ, ມຸງສັງກະສີ | ມ$^2$ | 322.500 | |
| | | ຄ5.2 | ໂຄງໄມ້ລ່ຽມ, ເທພື້ນເບຕົງ, ມຸງສັງກະສີ | ມ$^2$ | 580.500 | |
| | | ຄ5.3 | ໂຄງໄມ້ລ່ຽມ, ເທພື້ນເບຕົງ, ມຸງກະເບື້ອງ | ມ$^2$ | 709.500 | |
| | | ຄ5.4 | ໂຄງເຫຼັກ, ເທພື້ນເບຕົງ, ມຸງກະເບື້ອງ | ມ$^2$ | 774.000 | |
| | | ຄ5.5 | ໂຄງເຫຼັກ, ເທພື້ນເບຕົງ, ມຸງອາລູຊິ້ງ | ມ$^2$ | 838.500 | |
| | ຄ6 | ປະເພດຫ້ອງນ້ຳ , ອ່າງເກັບນ້ຳ | | | | |
| | | ຄ6.1 | ຫ້ອງນ້ຳວິດຊຶມທຳມະດາ | ມ$^2$ | 1.161.000 | |
| | | ຄ6.2 | ກໍ່ດ້ວຍດິນຈີ່, ມຸງສັງກະສີ | ມ$^2$ | 1.573.800 | |
| | | ຄ6.3 | ຝາດິນຈີ່, ຕິດກາໂລ, ມຸງກະເບື້ອງ | ມ$^2$ | 3.289.500 | |

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| | | ຄ6.4 | ອ່າງເກັບນໍ້າກໍ່ດ້ວຍດິນຈີ່ໂບກປູນ(ແບບທໍາມະດາ) | $ມ^2$ | 967.500 | |
| | ຄ7 | ປະເພດເລົ້າເຂົ້າ | | | | |
| | | ຄ7.1 | ໂຄງສ້າງໄມ້ກົມ, ຝາໄມ້ປ່ອງ, ມຸງຫຍ້າ | $ມ^2$ | 490.200 | |
| | | ຄ7.2 | ໂຄງສ້າງໄມ້ລ່ຽມ, ຝາໄມ້ແປ້ນ, ມຸງສັງກະສີ | $ມ^2$ | 967.500 | |
| | | ຄ7.3 | ໂຄງສ້າງໄມ້ລ່ຽມ, ຝາໄມ້ແປ້ນ, ມຸງກະເບື້ອງ | $ມ^2$ | 1.096.500 | |
| | ຄ8 | ປະເພດສາງເຄື່ອງ | | | | |
| | | ຄ8.1 | ໂຄງສ້າງໄມ້, ມຸງສັງກະສີ | $ມ^2$ | 748.200 | |
| | | ຄ8.2 | ໂຄງສ້າງເຫຼັກ, ມຸງອາລູຊີ້ງ | $ມ^2$ | 1.470.600 | |
| | | ຄ8.3 | ເສົາເບຕົງ, ກໍ່ດ້ວຍດິນຈີ່, ມຸງສັງກະສີ | $ມ^2$ | 1.315.800 | |
| | | ຄ8.4 | ເສົາເບຕົງ, ກໍ່ດ້ວຍດິນຈີ່, ມຸງກະເບື້ອງ | $ມ^2$ | 2.322.000 | |
| | ຄ9 | ຟາມ | | | | |
| | | ຄ9.1 | ໂຄງສ້າງໄມ້, ມຸງສັງກະສີແບບປະຖົມປະຖານ | $ມ^2$ | 129.000 | |
| | | ຄ9.2 | ໂຄງສ້າງເຫຼັກ, ມຸງສັງກະສີ | $ມ^2$ | 451.500 | |
| | | ຄ9.3 | ໂຄງສ້າງເຫຼັກ, ມຸງກະເບື້ອງ | $ມ^2$ | 580.500 | |
| | | ຄ9.4 | ໂຄງສ້າງເຫຼັກ, ມຸງອາລູຊີ້ງ | $ມ^2$ | 516.000 | |
| | ຄ 10 | ໂຮງເລື່ອຍ, ໂຮງສີເຂົ້າ | | | | |
| | | ຄ10.1 | ໂຄງຮ່າງໄມ້, ມຸງສັງກະສີ | $ມ^2$ | 412.800 | |
| | | ຄ10.2 | ໂຄງຮ່າງໄມ້, ມຸງກະເບື້ອງ | $ມ^2$ | 645.000 | |
| | | ຄ10.3 | ໂຄງຮ່າງເຫັກ, ມຸງກະເບື້ອງ | $ມ^2$ | 1.290.000 | |
| | | ຄ10.4 | ໂຄງຮ່າງເຫຼັກ, ມຸງອາລູຊີ້ງ | $ມ^2$ | 1.032.000 | |
| | ຄ11 | ປະເພດຮົ້ວ | | | | |
| | | ຄ11.1 | ກະແຕະໄມ້ | ມຍ | 19.350 | |
| | | ຄ11.2 | ຫຼັກຮົ້ວໄມ້ແກນລ້ອມ | ຫຼັກ | 38.700 | |
| | | ຄ11.3 | ໜາມໜາກຈັບ | ໂຄ້ງ | 154.800 | |
| | | ຄ11.4 | ຮົ້ວເສົາເບຕົງ | ຫຼັກ | 193.500 | |
| | | ຄ11.5 | ຕາໜ່າງເຫຼັກ ສູງ 2 ມ | ມຍ | 51.600 | |
| | | ຄ11.6 | ຮົ້ວຕະໜ່າງເຫຼັກດັດ | ມຍ | 451.500 | |
| | | ຄ11.7 | ຮົ້ວກໍ່ດິນບ໋ອກ | ມຍ | 451.500 | |
| | | ຄ11.8 | ຮົ້ວກໍ່ດິນຈີ່ | ມຍ | 645.000 | |
| | | ຄ11.9 | ຮົ້ວເຄິ່ງກໍ່ດິນຈີ່ ເຄິ່ງເຫຼັກດັດ ລວມເສົາ | ມຍ | 838.500 | |
| | | ຄ 11.10 | ຮົ້ວເຄິ່ງກໍ່ດິນບ໋ອກ ເຄິ່ງເຫຼັກດັດ ລວມເສົາ | ມຍ | 709.500 | |
| | | ຄ 11.11 | ຮົ້ວແບບທັນສະໄໝ (ຮົ້ວຫຼູ) | ມຍ | 1.935.000 | |
| | ຄ12 | ກັນເຈື່ອນ | | | | |
| | | ຄ12.1 | ກະຕ່າຫີນ | $ມ^3$ | 967.500 | |
| | | ຄ12.2 | ກໍ່ກັນເຈື່ອນ(ກໍ່ດ້ວຍດິນຈີ່ຝາ 20 ຊມ) | $ມ^2$ | 516.000 | |

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| | | ຄ12.3 | ຕ້ານເຈື່ອນ(ກໍ່ດ້ວຍຫີນແຂງ) | ມ$^3$ | 1.135.200 | |
| | ຄ 13 | ວຽກຕົກແຕ່ງ | | | | |
| | | ຄ13.1 | ເພດານໄມ້ເນື້ອແຂງເຂົ້າຫຼີ້ມ ພ້ອມໄມ້ມອບ | ມ$^2$ | 664.350 | |
| | | ຄ13.2 | ຝາໄມ້ເນື້ອແຂງເຂົ້າຫຼີ້ມ ພ້ອມໄມ້ມອບ | ມ$^2$ | 709.500 | |
| | | ຄ13.3 | ເພດານໄມ້ເນື້ອອ່ອນເຂົ້າຫຼີ້ມ ພ້ອມໄມ້ມອບ | ມ$^2$ | 322.500 | |
| | | ຄ13.4 | ຝາໄມ້ເນື້ອອ່ອນເຂົ້າຫຼີ້ມ ພ້ອມໄມ້ມອບ | ມ$^2$ | 451.500 | |
| | | ຄ13.5 | ເພດານ ຫຍິບຊໍ້າພ້ອມໂຄງ, ເພດານແຜ່ນລຽບ | ມ$^2$ | 154.800 | |
| | | ຄ13.6 | ພື້ນປັກເກແບບລວດລາຍ | ມ$^2$ | 924.930 | |
| | | ຄ13.7 | ພື້ນປັກເກແບບລຽບງ່າຍ | ມ$^2$ | 802.380 | |
| | | ຄ13.8 | ປູຫີນ ກລານິດ ທຸກຂະໜາດ | ມ$^2$ | 749.490 | |
| | | ຄ13.9 | ປູກາໂລ ທຸກຂະໜາດ | ມ$^2$ | 318.630 | |
| | | ຄ 13.10 | ໂບກຫີນຂັດ ໜາ 1.5 ຊມ | ມ$^2$ | 402.480 | |
| | | ຄ 13.11 | ປູພື້ນດ້ວຍຫີນຂັດ ໜາ 2-2.5ຊມ ໃສ່ເສັ້ນທອງ | ມ$^2$ | 718.530 | |

ຕາຕະລາງ 4 ລາຍລະອຽດການກຳນົດຫົວໜ່ວຍລາຄາປະເພດຕົ້ນໄມ້ ແລະ ຜົນລະປູກ

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| **ງ** | **ປະເພດຕົ້ນໄມ້ ແລະ ຜົນລະປູກ** | | | | | |
| | ງ1 | ຕົ້ນໄມ້ອຸດສາຫະກຳ | | | | |
| | | ງ1.1 | ຢາງພາລາ 1 ປີ | ຕົ້ນ | 38.700 | |
| | | ງ1.2 | ຢາງພາລາ 2 ປີ | ຕົ້ນ | 42.570 | |
| | | ງ1.3 | ຢາງພາລາ 3 ປີ | ຕົ້ນ | 58.050 | |
| | | ງ1.4 | ຢາງພາລາ 4 ປີ | ຕົ້ນ | 70.950 | |
| | | ງ1.5 | ຢາງພາລາ 5 ປີ | ຕົ້ນ | 83.850 | |
| | | ງ1.6 | ຢາງພາລາ 6 ປີ | ຕົ້ນ | 96.750 | |
| | | ງ1.7 | ຢາງພາລາ 7-12 ປີ | ຕົ້ນ | 180.600 | |
| | | ງ1.8 | ຢາງພາລາ 13 ປີ ຂຶ້ນໄປ | ຕົ້ນ | 328.950 | |
| | | ງ1.9 | ໝາກເກົ່າ, ຊາ, ກາເຟ 1 ປີ | ຕົ້ນ | 27.090 | |
| | | ງ1.10 | ໝາກເກົ່າ, ຊາ, ກາເຟ 2 ປີ | ຕົ້ນ | 29.670 | |
| | | ງ1.11 | ໝາກເກົ່າ, ຊາ, ກາເຟ 3 ປີ | ຕົ້ນ | 39.990 | |
| | | ງ1.12 | ໝາກເກົ່າ, ຊາ, ກາເຟ 4 ປີ | ຕົ້ນ | 49.020 | |
| | | ງ1.13 | ໝາກເກົ່າ, ຊາ, ກາເຟ 5 ປີ | ຕົ້ນ | 58.050 | |
| | | ງ1.14 | ໝາກເກົ່າ, ຊາ, ກາເຟ 6 ປີ | ຕົ້ນ | 67.080 | |
| | | ງ1.15 | ໝາກເກົ່າ, ຊາ, ກາເຟ 7-12 ປີ | ຕົ້ນ | 126.420 | |
| | | ງ1.16 | ໝາກເກົ່າ, ຊາ, ກາເຟ 13 ປີຂຶ້ນໄປ | ຕົ້ນ | 229.620 | |
| | | ງ1.17 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 1 ປີ | ຕົ້ນ | 38.700 | |

| ລ/ດ | | | ເນື້ອໃນລາຍການ | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| | | ງ1.18 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 2 ປີ | ຕົ້ນ | 42.570 | |
| | | ງ1.19 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 3 ປີ | ຕົ້ນ | 58.050 | |
| | | ງ1.20 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 4 ປີ | ຕົ້ນ | 70.950 | |
| | | ງ1.21 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 5 ປີ | ຕົ້ນ | 83.850 | |
| | | ງ1.22 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 6-10 ປີ | ຕົ້ນ | 109.650 | |
| | | ງ1.23 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 11-15 ປີ | ຕົ້ນ | 187.050 | |
| | | ງ1.24 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 16-20 ປີ ຂຶ້ນໄປ | ຕົ້ນ | 251.550 | |
| | | ງ1.25 | ໄມ້ດູ່, ໄມ້ຄ່າ, ຂະຍຸງ, ດູ່ລາຍ 21 ປີ ຂຶ້ນໄປ | ຕົ້ນ | 290.250 | |
| | | ງ1.26 | ໄມ້ວິກ, ໄມ້ສັກ, ສະໂກ, ທ່ຽນ, ປໍສາ, ຂີ້ເຫຼັກ, ກະຖິນນາລີງ, ກະຖິນເທພາ, ເກດສະໜາ 1 ປີ | ຕົ້ນ | 38.700 | |
| | | ງ1.27 | ໄມ້ວິກ, ໄມ້ສັກ, ສະໂກ, ທ່ຽນ, ປໍສາ, ຂີ້ເຫຼັກ, ກະຖິນນາລີງ, ກະຖິນເທພາ, ເກດສະໜາ 2 ປີ | ຕົ້ນ | 42.570 | |
| | | ງ1.28 | ໄມ້ວິກ, ໄມ້ສັກ, ສະໂກ, ທ່ຽນ, ປໍສາ, ຂີ້ເຫຼັກ, ກະຖິນນາລີງ, ກະຖິນເທພາ, ເກດສະໜາ 3 ປີ | ຕົ້ນ | 58.050 | |
| | | ງ1.29 | ໄມ້ວິກ, ໄມ້ສັກ, ສະໂກ, ທ່ຽນ, ປໍສາ, ຂີ້ເຫຼັກ, ກະຖິນນາລີງ, ກະຖິນເທພາ, ເກດສະໜາ 4 ປີ | ຕົ້ນ | 70.950 | |
| | | ງ1.30 | ໄມ້ວິກ, ໄມ້ສັກ, ສະໂກ, ທ່ຽນ, ປໍສາ, ຂີ້ເຫຼັກ, ກະຖິນນາລີງ, ກະຖິນເທພາ, ເກດສະໜາ 5 ປີ | ຕົ້ນ | 83.850 | |
| | | ງ1.31 | ໄມ້ວິກ, ໄມ້ສັກ, ສະໂກ, ທ່ຽນ, ປໍສາ, ຂີ້ເຫຼັກ, ກະຖິນນາລີງ, ກະຖິນເທພາ, ເກດສະໜາ 6-10 ປີ | ຕົ້ນ | 96.750 | |
| | | ງ1.32 | ໄມ້ວິກ, ໄມ້ສັກ, ສະໂກ, ທ່ຽນ, ປໍສາ, ຂີ້ເຫຼັກ, ກະຖິນນາລີງ, ກະຖິນເທພາ, ເກດສະໜາ 11-15 ປີ | ຕົ້ນ | 135.450 | |
| | | ງ1.33 | ໄມ້ວິກ, ໄມ້ສັກ, ສະໂກ, ທ່ຽນ, ປໍສາ, ຂີ້ເຫຼັກ, ກະຖິນນາລີງ, ກະຖິນເທພາ, ເກດສະໜາ 16-20 ປີ | ຕົ້ນ | 174.150 | |
| | | ງ1.34 | ໄມ້ວິກ, ໄມ້ສັກ, ສະໂກ, ທ່ຽນ, ປໍສາ, ຂີ້ເຫຼັກ, ກະຖິນນາລີງ, ກະຖິນເທພາ, ເກດສະໜາ21ປີຂຶ້ນໄປ | ຕົ້ນ | 193.500 | |
| | | ງ1.35 | ໝາກນໍ້າມັນ 1 ປີ | ສຸມ | 27.090 | |
| | | ງ1.36 | ໝາກນໍ້າມັນ 2 ປີ | ສຸມ | 29.670 | |
| | | ງ1.37 | ໝາກນໍ້າມັນ 3 ປີ | ສຸມ | 39.990 | |
| | | ງ1.38 | ໝາກນໍ້າມັນ 4 ປີ | ສຸມ | 49.020 | |
| | | ງ1.39 | ໝາກນໍ້າມັນ 5 ປີ | ສຸມ | 58.050 | |
| | | ງ1.40 | ໝາກນໍ້າມັນ 6 ປີ | ສຸມ | 67.080 | |
| | | ງ1.41 | ໝາກນໍ້າມັນ 7-12 ປີ | ສຸມ | 126.420 | |
| | | ງ1.42 | ໝາກນໍ້າມັນ 13 ປີຂຶ້ນໄປ | ສຸມ | 229.620 | |
| | ງ2 | ຕົ້ນໄມ້ໃຫ້ໝາກ | | | | |
| | | ງ2.1 | ໝາກພຸກ, ໝາກກ້ຽງ, ໝາກນາວ, ສົ້ມຂຽວ 1 ປີ | ຕົ້ນ | 38.700 | |
| | | ງ2.2 | ໝາກພຸກ, ໝາກກ້ຽງ, ໝາກນາວ, ສົ້ມຂຽວ 2-4 ປີ | ຕົ້ນ | 51.600 | |
| | | ງ2.3 | ໝາກພຸກ, ໝາກກ້ຽງ, ໝາກນາວ, ສົ້ມຂຽວ 5 ປີ | ຕົ້ນ | 77.400 | |

| ລ/ດ | ເນື້ອໃນລາຍການ | | | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| | | ງ2.4 | ໝາກພຸກ, ໝາກກ້ຽງ, ໝາກນາວ, ສົ້ມຂຽວ 6-7 ປີ | ຕົ້ນ | 103.200 | |
| | | ງ2.5 | ໝາກພຸກ, ໝາກກ້ຽງ, ໝາກນາວ,ສົ້ມຂຽວ8ປີຂຶ້ນໄປ | ຕົ້ນ | 193.500 | |
| | | ງ2.6 | ໝາກມ່ວງ, ອາໂວກາໂດ 1-3ປີ | ຕົ້ນ | 45.150 | |
| | | ງ2.7 | ໝາກມ່ວງ, ອາໂວກາໂດ 4-6 ປີ | ຕົ້ນ | 77.400 | |
| | | ງ2.8 | ໝາກມ່ວງ, ອາໂວກາໂດ 7-8 ປີ | ຕົ້ນ | 116.100 | |
| | | ງ2.9 | ໝາກມ່ວງ, ອາໂວກາໂດ 9 ປີຂຶ້ນໄປ | ຕົ້ນ | 232.200 | |
| | | ງ2.10 | ໝາກມີ້, ຂາມ, ຕ້ອງ, ນໍ້ານົມ 1-3 ປີ | ຕົ້ນ | 51.600 | |
| | | ງ2.11 | ໝາກມີ້, ຂາມ, ຕ້ອງ, ນໍ້ານົມ 4-6 ປີ | ຕົ້ນ | 90.300 | |
| | | ງ2.12 | ໝາກມີ້, ຂາມ, ຕ້ອງ, ນໍ້ານົມ 7-9 ປີ | ຕົ້ນ | 129.000 | |
| | | ງ2.13 | ໝາກມີ້, ຂາມ, ຕ້ອງ, ນໍ້ານົມ 10 ປີຂຶ້ນໄປ | ຕົ້ນ | 180.600 | |
| | | ງ2.14 | ໝາກມັງກອນ, ອາງຸ່ນ, ລາແຊັງ 1-2 ປີ | ສຸມ | 51.600 | |
| | | ງ2.15 | ໝາກມັງກອນ, ອາງຸ່ນ, ລາແຊັງ 3-5 ປີ | ສຸມ | 90.300 | |
| | | ງ2.16 | ໝາກມັງກອນ, ອາງຸ່ນ, ລາແຊັງ 6-10 ປີ | ສຸມ | 154.800 | |
| | | ງ2.17 | ໝາກມັງກອນ, ອາງຸ່ນ, ລາແຊັງ 11 ປີຂຶ້ນໄປ | ສຸມ | 193.500 | |
| | | ງ2.18 | ໝາກລິ້ນຈີ່, ເງາະ, ກະທັນ, ລໍາໄຍ, ລະມຸດ 1-3 ປີ | ຕົ້ນ | 64.500 | |
| | | ງ2.19 | ໝາກລິ້ນຈີ່, ເງາະ, ກະທັນ, ລໍາໄຍ, ລະມຸດ 4-6 ປີ | ຕົ້ນ | 90.300 | |
| | | ງ2.20 | ໝາກລິ້ນຈີ່, ເງາະ, ກະທັນ, ລໍາໄຍ, ລະມຸດ 7-9 ປີ | ຕົ້ນ | 154.800 | |
| | | ງ2.21 | ໝາກລິ້ນຈີ່, ເງາະ, ກະທັນ,ລໍາໄຍ,ລະມຸດ10ປີຂຶ້ນໄປ | ຕົ້ນ | 232.200 | |
| | | ງ2.22 | ໝາກຫຼອດ, ຝຸງ, ມັ້ນ, ສີດາ, ຂຽບ, ຄາຍ 1-2 ປີ | ຕົ້ນ | 45.150 | |
| | | ງ2.23 | ໝາກຫຼອດ, ຝຸງ, ມັ້ນ, ສີດາ, ຂຽບ, ຄາຍ 4-6 ປີ | ຕົ້ນ | 96.750 | |
| | | ງ2.24 | ໝາກຫຼອດ, ຝຸງ, ມັ້ນ, ສີດາ, ຂຽບ, ຄາຍ 7-9 ປີ | ຕົ້ນ | 154.800 | |
| | | ງ2.25 | ໝາກຫຼອດ, ຝຸງ, ມັ້ນ, ສີດາ, ຂຽບ, ຄາຍ10 ປີຂຶ້ນໄປ | ຕົ້ນ | 206.400 | |
| | | ງ2.26 | ໝາກພ້າວ, ຄໍ້, ໝາກຄ້ຽວ 1-4 ປີ | ຕົ້ນ | 77.400 | |
| | | ງ2.27 | ໝາກພ້າວ, ຄໍ້, ໝາກຄ້ຽວ 5-8 ປີ | ຕົ້ນ | 116.100 | |
| | | ງ2.28 | ໝາກພ້າວ, ຄໍ້, ໝາກຄ້ຽວ 9-10 ປີ | ຕົ້ນ | 167.700 | |
| | | ງ2.29 | ໝາກພ້າວ, ຄໍ້, ໝາກຄ້ຽວ 11 ປີຂຶ້ນໄປ | ຕົ້ນ | 219.300 | |
| | | ງ2.30 | ໝາກແຂ່ນ, ໝາກມາດ, ໝາກໄຟ 1-5 ປີ | ຕົ້ນ | 51.600 | |
| | | ງ2.31 | ໝາກແຂ່ນ, ໝາກມາດ, ໝາກໄຟ 6-8 ປີ | ຕົ້ນ | 90.300 | |
| | | ງ2.32 | ໝາກແຂ່ນ, ໝາກມາດ, ໝາກໄຟ 9-10 ປີ | ຕົ້ນ | 154.800 | |
| | | ງ2.33 | ໝາກແຂ່ນ, ໝາກມາດ, ໝາກໄຟ 11 ປີ | ຕົ້ນ | 193.500 | |
| | | ງ2.34 | ໝາກມອນໄຂ່, ພິລາ, ຈຽງ 1-2 ປີ | ຕົ້ນ | 25.800 | |
| | | ງ2.35 | ໝາກມອນໄຂ່, ພິລາ, ຈຽງ 3-6 ປີ | ຕົ້ນ | 51.600 | |
| | | ງ2.36 | ໝາກມອນໄຂ່, ພິລາ, ຈຽງ 7-9 ປີ | ຕົ້ນ | 90.300 | |
| | | ງ2.37 | ໝາກມອນໄຂ່, ພິລາ, ຈຽງ 10 ປີຂຶ້ນໄປ | ຕົ້ນ | 154.800 | |
| | | ງ2.38 | ໝາກງິ້ວ 5 ປີ ລົງມາ | ຕົ້ນ | 77.400 | |
| | | ງ2.39 | ໝາກງິ້ວ 5 ປີ ຂຶ້ນໄປ | ຕົ້ນ | 129.000 | |
| | | ງ2.40 | ຫມາກຂີ້ຫູດ, ບີກະທິງ, ແມງດາ, ດອກແຄ, ສົ້ມປ່ອຍ, ຜັກຂະ, ຫມາກກອກນໍ້າ, ຫມາກກອກທໍາ | ຕົ້ນ | 77.400 | |

| ລ/ດ | | | ເນື້ອໃນລາຍການ | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| | | | ມະຊາດ, ຜັກອີຮຸມ, ຂີ້ເຫຼັກ (ອື່ນໆເຊັ່ນ ປະເພດກິນໃບ) 5 ປີ ລົງມາ | | | |
| | | ງ2.41 | ຫມາກຂີ້ຫູດ, ບີກະທີງ, ແມງດາ, ດອກແຄ, ສົ້ມປ່ອຍ, ຜັກຂະ, ຫມາກກອກນ້ຳ, ຫມາກກອກທຳມະຊາດ, ຜັກອີຮຸມ, ຂີ້ເຫຼັກ (ອື່ນໆເຊັ່ນ ປະເພດກິນໃບ) 5 ປີຂຶ້ນໄປ | ຕົ້ນ | 154.800 | |
| | | ງ2.42 | ອິນທະຜາລຳ 5 ປີລົງມາ | ຕົ້ນ | 116.100 | |
| | | ງ2.43 | ອິນທະຜາລຳ 5 ປີຂຶ້ນໄປ | ຕົ້ນ | 258.000 | |
| | ງ3 | ເຄື່ອງຜີນລະປູກ | | | | |
| | | ງ3.1 | ກ້ອຍ | ສຸມ | 103.200 | |
| | | ງ3.2 | ອ້ອຍ | ສຸມ | 77.400 | |
| | | ງ3.3 | ໝາກແໜ່ງ 1-4 ປີ | ຕົ້ນ | 19.350 | |
| | | ງ3.4 | ໝາກແໜ່ງ 5 ປີ | ຕົ້ນ | 25.800 | |
| | | ງ3.5 | ໝາກນັດ | ຕົ້ນ | 25.800 | |
| | | ງ3.6 | ເຜືອກມັນ, ພືດຜັກ ແລະ ອື່ນໆ(ໃນສວນ) | ສຸມ | 25.800 | |
| | ງ4 | ໄມ້ປ່ອງ | | | | |
| | | ງ4.1 | ໄມ້ຊາງໄຜ່,ໄມ້ໄຜ່ບ້ານ, ໄມ້ຫົກຫວານ | ລຳ | 19.350 | |
| | | ງ4.2 | ໄມ້ໄຜ່ຫວານ-ບົງຫວານ, ໄມ້ເຮ້ຍ | ລຳ | 12.900 | |
| | ງ5 | ຕົ້ນໄມ້ປະດັບ | | | | |
| | | ງ5.1 | ຝາງແດງ | ຕົ້ນ | 54.180 | |
| | | ງ5.2 | ດອກຄູນ | ຕົ້ນ | 46.440 | |
| | | ງ5.3 | ຕົ້ນສົນ | ຕົ້ນ | 77.400 | |
| | | ງ5.4 | ວາດສະໜາ | ຕົ້ນ | 46.440 | |
| | | ງ5.5 | ຕົ້ນຄູນອິນເດຍ | ຕົ້ນ | 46.440 | |
| | | ງ5.6 | ຕົ້ນໄຮ | ຕົ້ນ | 54.180 | |

- ຕໍ່ຊັບສິນຕົ້ນໄມ້ອື່ນໆ ທີ່ຍັງບໍ່ທັນໄດ້ກຳນົດໃນລາຄາຫົວໜ່ວຍຄ່າທົດແທນຄ່າເສຍຫາຍຂ້າງເທິງນີ້ ແມ່ນໃຫ້ປັບໃສ່ມູນຄ່າຂອງຊັບສິນ ຫຼື ຕົ້ນໄມ້ ທີ່ໃກ້ຄຽງກັນ ພ້ອມດຽວກັນນີ້ ແມ່ນມອບໃຫ້ຄະນະກຳມະການໄກ່ເກ່ຍ ພິຈາລະນາຕາມຄວາມເປັນຈິງ ແລະ ເໝາະສົມ;

- ສຳລັບຕົ້ນໄມ້ທຳມະຊາດ ທີ່ເກີດຂຶ້ນເອງຕາມທຳມະຊາດ ແລະ ບັນດາພືດຕົ້ນຕໍ່າ (ຕົ້ນໄມ້ບໍ່ໄດ້ປູກດ້ວຍຕົ້ນເອງເຊັ່ນ: ປ່າເຫຼົ່າ ຫຼື ໄຮ່ເຫຼົ່າ) ແມ່ນຈະບໍ່ໄດ້ທົດແທນຄ່າເສຍຫາຍ.

## ໝວດທີ 5
## ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ແຕ່ລະຂັ້ນ

**ມາດຕາ 18 ອົງການຄຸ້ມຄອງ ວຽກລາຄາຫົວໜ່ວຍທົດແທນຄ່າເສຍຫາຍ**

1. ຄະນະຊີ້ນຳໂຄງການ ແລະ ຫ້ອງການປະສານງານຂັ້ນສູນກາງ;

2. ຄະນະກຳມະການໄກ່ເກ່ຍຍົກຍ້າຍສິ່ງກີດຂວາງ;
3. ຫ້ອງການຈັດຕັ້ງປະຕິບັດງານຂັ້ນແຂວງ;
4. ອົງການປົກຄອງເມືອງ.
5. ອົງການປົກຄອງບ້ານ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງຄະນະຊີ້ນຳໂຄງການ ແລະ ຫ້ອງການປະສານງານຂັ້ນສູນກາງ**

1. ປະສານສົມທົບກັບຜູ້ໃຫ້ທຶນ, ເຜີຍແຜ່ນະໂຍບາຍ ແລະ ລະບຽບຂອງຜູ້ໃຫ້ທຶນ ໂດຍຜ່ານທີ່ປຶກສາຂອງໂຄງການ ຫຼື ໂດຍກົງຈາກຄະນະກຳມະການທີ່ກ່ຽວຂ້ອງ;
2. ນຳພາ, ຊີ້ນຳຄຸ້ມຄອງການວາງແຜນຈັດຕັ້ງປະຕິບັດໂຄງການຕາມແຜນແມ່ບົດ ທີ່ຜ່ານການຮັບຮອງລະຫວ່າງຜູ້ໃຫ້ທຶນ ກັບ ລັດຖະບານ ແຫ່ງ ສປປ ລາວ;
3. ປະສານສົມທົບກັບໜ່ວຍງານຂັ້ນແຂວງ ແລະ ຄະນະທີ່ປຶກສາທີ່ກ່ຽວຂອງໂຄງການ ເພື່ອຈັດຕັ້ງປະຕິບັດວຽກງານໃຫ້ສະດວກ;
4. ຮັບຮອງເອົານິຕິກຳ ອອກຂໍ້ຕົກລົງ ຫຼື ແຈ້ງການຕ່າງໆ ທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດວຽກງານທົດແທນຄ່າເສຍຫາຍໃນເຂດໂຄງການ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງຄະນະກຳມະການໄກ່ເກ່ຍຍົກຍ້າຍສິ່ງກີດຂວາງ**

1. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເຂົ້າຮ່ວມການປຶກສາຫາລືວຽກງານທົດແທນຄ່າເສຍຫາຍຈາກໂຄງການ;
2. ຕິດຕາມ, ກວດສອບການຈັດຕັ້ງປະຕິບັດວຽກງານທົດແທນ;
3. ເຂົ້າຮ່ວມການປຶກສາຫາລືດ້ານການອອກນະໂຍບາຍ, ລາຄາຫົວໜ່ວຍທົດແທນ ແລະ ຂໍ້ກຳນົດອື່ນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກງານທົດແທນ;
4. ເຜີຍແຜ່ຂໍ້ມູນຂ່າວສານໃຫ້ຜູ້ໄດ້ຮັບຜົນກະທົບໃນເຂດໂຄງການໃຫ້ທົ່ວເຖິງ, ເຂົ້າຮ່ວມການເກັບກຳຂໍ້ມູນຜູ້ທີ່ມີຄວາມເຫັນ ຫຼື ຂໍ້ສະເໜີໃນການຈັດຕັ້ງປະຕິບັດໂຄງການ;
5. ເຜີຍແຜ່ນະໂຍບາຍ ແລະ ສິດທິ ໃຫ້ຜູ້ໄດ້ຮັບຜົນກະທົບຈາກໂຄງການໄດ້ຮັບຊາບຕໍ່ແນວທາງການພັດທະນາຂອງໂຄງການ, ຊຸກຍູ້ ແລະ ລະດົມແນວຄິດຂອງຜູ້ໄດ້ຮັບຜົນກະທົບໃຫ້ເຂົ້າໃຈຕໍ່ແນວທາງການພັດທະນາໂຄງການ ໃຫ້ໄດ້ຮັບໝາກຜົນ;
6. ເຂົ້າຮ່ວມຂະບວນການທົດແທນ ກັບຜູ້ໄດ້ຮັບຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກຳຂໍ້ມູນຊັບສິນ, ສຳຫຼວດເສດຖະກິດຄົວເຮືອນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງຫ້ອງການປະຕິບັດງານຂັ້ນແຂວງ**

1. ເປັນເສນາທິການໃຫ້ຄະນະຊີ້ນຳຂັ້ນແຂວງ ແລະ ຫ້ອງການປະສານງານຂັ້ນສູນກາງ ລາຍງານຜົນການຈັດຕັ້ງປະຕິບັດວຽກງານທົດແທນໃນຂອບເຂດໂຄງການທີ່ໄດ້ຮັບຜົນກະທົບ;
2. ວາງແຜນການເຄື່ອນໄຫວວຽກງານ, ຂຶ້ນແຜນດ້ານງົບປະມານ ທັງວຽກງານບໍລິຫານ ແລະ ວຽກງານການທົດແທນໃນທຸກຂົງເຂດຜົນກະທົບຂອງໂຄງການ;
3. ປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວວຽກງານທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກໂຄງການ;
4. ເຜີຍແຜ່ຂໍ້ມູນຂ່າວສານ, ລະບຽບຫຼັກການ ທີ່ກ່ຽວຂ້ອງຂອງໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າໃຈຢ່າງທົ່ວເຖິງ ກ່ຽວກັບແນວທາງການຈັດຕັ້ງປະຕິບັດ ແລະ ໃຫ້ຄວາມຮ່ວມມືໃນການເຄື່ອນໄຫວວຽກງານ;

5. ເຂົ້າຮ່ວມຂະບວນການທົດແທນ ກັບຜູ້ໄດ້ຮັບຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກໍາຂໍ້ມູນຊັບສິນ, ສໍາຫຼວດເສດຖະກິດຄົວເຮືອນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ;

6. ປະຕິບັດຕາມການມອບໝາຍຂອງຂັ້ນເທິງ ກໍຄືລັດຖະບານ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງອົງການປົກຄອງຂັ້ນເມືອງ**

1. ເປັນເສນາທິການໃຫ້ຄະນະຊີ້ນໍາຂັ້ນເມືອງ ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານທົດແທນໃນຂອບເຂດໂຄງການໄດ້ຮັບຜົນກະທົບ;

2. ວາງແຜນການເຄື່ອນໄຫວວຽກງານ, ຂຶ້ນແຜນດ້ານງົບປະມານ ທັງວຽກງານບໍລິຫານ ແລະ ວຽກງານທົດແທນໃນທຸກຂົງເຂດເມືອງໄດ້ຮັບຜົນກະທົບຂອງໂຄງການ;

3. ປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວວຽກງານທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກໂຄງການ;

4. ເຜີຍແຜ່ຂໍ້ມູນຂ່າວສານ, ລະບຽບຫຼັກການ ທີ່ກ່ຽວຂ້ອງຂອງໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າໃຈຢ່າງທົ່ວເຖິງ ກ່ຽວກັບແນວທາງການຈັດຕັ້ງປະຕິບັດ ແລະ ໃຫ້ຄວາມຮ່ວມມືໃນການເຄື່ອນໄຫວວຽກງານ;

5. ເຂົ້າຮ່ວມຂະບວນການທົດແທນ ກັບຜູ້ໄດ້ຮັບຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກໍາຂໍ້ມູນຊັບສິນ, ສໍາຫຼວດເສດຖະກິດຄົວເຮືອນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ.

6. ປະຕິບັດຕາມການມອບໝາຍຂອງຂັ້ນເທິງ ກໍຄືລັດຖະບານ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

1. ສຶກສາອົບຮົມ ແລະ ເຜີຍແຜ່ຂໍ້ມູນຂ່າວສານໃຫ້ປະຊາຊົນຮັບຮູ້, ເຂົ້າໃຈກ່ຽວກັບແຜນພັດທະນາໂຄງການໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ໃຫ້ຄວາມຮ່ວມມື ແລະ ເຂົ້າຮ່ວມກິດຈະກໍາຂອງໂຄງການ ໃນຂອບເຂດທີ່ຕົນຮັບຜິດຊອບ;

3. ເປັນເຈົ້າການເຂົ້າຮ່ວມຂະບວນການໄກ່ເກ່ຍຄໍາຮ້ອງທຸກທີ່ເກີດຂຶ້ນຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການ, ສັງລວມບັນຫາທີ່ເກີດຂຶ້ນ ແລະ ແຈ້ງໃຫ້ໜ່ວຍງານທີ່ກ່ຽວຂ້ອງໄດ້ຮັບຊາບຕາມຂັ້ນຕອນ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ.

## ໝວດທີ 6
## ສິດ, ໜ້າທີ່ ແລະ ພັນທະ ເຈົ້າຂອງໂຄງການ ແລະ ຜູ້ທີ່ໄດ້ຮັບຜົນກະທົບ

**ມາດຕາ 24 ສິດ ແລະ ໜ້າທີ່ ເຈົ້າຂອງໂຄງການ**

1. ສ້າງບົດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທໍາມະຊາດ ລວມທັງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ ເປັນພາສາລາວ ສໍາລັບໂຄງການພັດທະນາຂອງຕົນໃຫ້ຖືກຕ້ອງ ແລະ ສອດຄ່ອງ ກັບບົດແນະນໍາ ທາງດ້ານວິຊາການທີ່ກ່ຽວຂ້ອງ ເພື່ອສະເໜີຕໍ່ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງເອົາກ່ອນຈະດໍາເນີນການກໍ່ສ້າງໂຄງການ ຫຼື ການເຊັນສັນຍາສໍາປະທານໂຄງການ ໂດຍໃຫ້ສອດຄ່ອງກັບກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງ ແວດລ້ອມ (ສະບັບປັບປຸງ) ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

2. ສ້າງແຜນການທົດແທນຄ່າເສຍຫາຍ, ແຜນການຈັດສັນຍົກຍ້າຍ ແລະ ແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນເປັນພາສາລາວປະກອບເຂົ້າໃນແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ຂອງໂຄງການພັດທະນາຕົນ ໂດຍຮັບປະກັນ ໃຫ້ມີຄ່າໃຊ້ຈ່າຍຕ່າງໆຢ່າງພຽງພໍ ກໍາ

ນົດໄວ້ໃນແຜນການດັ່ງກ່າວ ເພື່ອໃຫ້ໄດ້ລວມເຂົ້າໃນມູນຄ່າຂອງໂຄງການ ແລະ ຖ້າຫາກວ່າງົບປະມານບໍ່ພຽງພໍໃນເວລາຈັດຕັ້ງປະຕິບັດຕົວຈິງ ເຈົ້າຂອງໂຄງການ ຕ້ອງສືບຕໍ່ຮັບຜິດຊອບ;

3. ກຳນົດນະໂຍບາຍການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ດີຂຶ້ນເທື່ອລະກ້າວ;

4. ໃຫ້ການຮ່ວມມື ກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນການປະຕິບັດ ແຜນການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ລວມທັງການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

5. ຕິດຕາມກວດກາດ້ວຍຕົນເອງ ໃນການປະຕິບັດແຜນການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ລວມທັງ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ຮັບຜິດຊອບຕໍ່ຂໍ້ມູນທີ່ຕົນສ້າງຂຶ້ນພ້ອມທັງສະໜອງ ແລະ ເປີດເຜີຍຂໍ້ມູນ ທີ່ຕິດພັນກັບການຈັດຕັ້ງປະຕິບັດໂຄງການພັດທະນາ ລວມທັງການປະຕິບັດແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃຫ້ແກ່ການຈັດຕັ້ງພາກລັດທີ່ກ່ຽວຂ້ອງ ແລະ ສາທາລະນະ;

7. ລາຍງານສະພາບການ ແລະ ເຫດການຕ່າງໆ ທີ່ພົວພັນກັບການທົດແທນຄ່າເສຍຫາຍ ແລະ ການຈັດສັນ ຍົກຍ້າຍ ລວມທັງ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ເປັນແຕ່ລະໄລຍະ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 25 ພັນທະເຈົ້າຂອງໂຄງການ**

1. ປະຕິບັດຢ່າງເຂັ້ມງວດ ຕໍ່ກັບພັນທະດ້ານສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ຂອງຕົນທີ່ກຳນົດໄວ້ໃນ ສັນຍາໂຄງການ, ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ແລະ ຕ້ອງໃຫ້ຜູ້ໄດ້ຮັບຜົນກະທົບ ລວມທັງ ຜູ້ທີ່ກ່ຽວຂ້ອງອື່ນມີສ່ວນຮ່ວມ ໃນທຸກຂັ້ນຕອນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ລວມທັງການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

2. ຮັບຜິດຊອບໂດຍກົງ ແລະ ພ້ອມທັງຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃຫ້ຖືກຕ້ອງ ແລະ ເຂັ້ມງວດ;

3. ຮັບຜິດຊອບຄ່າໃຊ້ຈ່າຍ ສຳລັບການວ່າຈ້າງ ຄະນະຊ່ຽວຊານພາຍໃນ ຫຼື ຕ່າງປະເທດ ຫຼື ອົງການກວດກາທີ່ມີບົດຮຽນ ແລະ ປະສົບການເພື່ອຊ່ວຍທັງເຈົ້າຂອງໂຄງການເອງ ແລະ ກະຊວງ ໂຍທາທິການ ແລະ ຂົນສົ່ງ ມາດຳເນີນການຕິດຕາມກວດກາ ແລະ ຕີລາຄາຜົນສຳເລັດ ໃນການປະຕິບັດແຜນການ ທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ລວມທັງການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ແລະ ກວດສອບການນຳໃຊ້ງົບປະມານ ກ່ຽວກັບວຽກງານດັ່ງກ່າວ;

4. ຮັບຜິດຊອບໃນການໃຊ້ຈ່າຍສຳລັບກິດຈະກຳ ທີ່ກ່ຽວຂ້ອງກັບຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ ກ່ຽວກັບ ການທົດແທນ ຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ;

5. ເຈົ້າຂອງໂຄງການມີພັນທະ ໃນການພັດທະນາ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ;

6. ຮັບ ແລະ ຈົດບັນທຶກ ຂໍ້ສະເໜີທັງໝົດ ທັງປາກເປົ່າ ແລະ ເປັນລາຍລັກອັກສອນ ຂອງຜູ້ໄດ້ຮັບຜົນກະທົບ ຈາກໂຄງການ;

7. ເຂົ້າຮ່ວມ ໃນການແກ້ໄຂຂໍ້ສະເໜີ ໃນທຸກຂັ້ນຕອນ, ໃນທຸກລະດັບ, ໃຫ້ການຮ່ວມມື, ສ້າງເງື່ອນໄຂສະດວກໃຫ້ແກ່ການແກ້ໄຂ ຂໍ້ສະເໜີ ດ້ວຍເຈດຕະນາດີ, ໂປ່ງໃສ ແລະ ເປີດເຜີຍ;

8. ຮັບຜິດຊອບການໃຊ້ຈ່າຍທັງໝົດ ຂອງຜູ້ໄດ້ຮັບຜົນກະທົບ ແລະ ການຈັດຕັ້ງຂອງລັດທີ່ກ່ຽວຂ້ອງກັບການ ແກ້ໄຂຂໍ້ສະເໜີ ໃນທຸກຂັ້ນຕອນ, ທຸກລະດັບ;

9. ປະຕິບັດພັນທະອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 26 ສິດ ແລະ ໜ້າທີ່ ຜູ້ທີ່ໄດ້ຮັບຜົນກະທົບ**

1. ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບ ໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບ ທີ່ຕົນຈະໄດ້ຮັບ, ຄວາມຄືບໜ້າ ກ່ຽວກັບ ການປະຕິບັດແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕະຫຼອດໄລຍະເວລາການຈັດຕັ້ງປະຕິບັດໂຄງການພັດທະນາ;

2. ເຂົ້າຮ່ວມກອງປະຊຸມປຶກສາຫາລືໃນລະດັບຕ່າງໆ, ປະກອບຄຳເຫັນຕໍ່ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງຕົນ;

3. ໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ ຕາມແຜນການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

4. ສະເໜີເປັນລາຍລັກອັກສອນ ຕໍ່ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຂັ້ນເມືອງ ຫຼື ຂັ້ນແຂວງ ເພື່ອພິຈາລະນາແກ້ໄຂ ບັນຫາທີ່ຕິດພັນກັບການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງຕົນ ຈາກໂຄງການພັດທະນາ;

5. ເຂົ້າຮ່ວມຢ່າງເປັນເຈົ້າການໃນການຈັດຕັ້ງປະຕິບັດແຜນການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຕາມການມອບໝາຍ.

**ມາດຕາ 27 ພັນທະຜູ້ໄດ້ຮັບຜົນກະທົບ**

1. ສະໜອງຂໍ້ມູນໃຫ້ຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງ ພ້ອມທັງຮັບຜິດຊອບຕໍ່ໜ້າ ກົດໝາຍກ່ຽວກັບ ຂໍ້ສະເໜີຂອງຕົນ;

2. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກແກ່ເຈົ້າຂອງໂຄງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການປະຕິບັດ ແຜນການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ ລວມທັງ ການແກ້ໄຂຂໍ້ສະເໜີຂອງຕົນ;

3. ປະຕິບັດພັນທະອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

## ໝວດທີ 7
## ອົງການຕິດຕາມກວດກາພາຍໃນ ແລະ ພາຍນອກ

**ມາດຕາ 28 ອົງການຕິດຕາມກວດກາພາຍໃນ**

ອົງການຕິດຕາມກວດກາພາຍໃນແມ່ນອົງການດຽວກັນກັບທີ່ໄດ້ກຳນົດໄວ້ໃນ ມາດຕາທີ 18

**ມາດຕາ 29 ອົງການຕິດຕາມກວດກາພາຍນອກ**

1. ສະພາປະຊາຊົນແຂວງ;
2. ອົງການກວດກາລັດແຂວງ;
3. ອົງການກວດສອບພາກເໜືອ 2;
4. ພະແນກການເງິນແຂວງ;
5. ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ;
6. ປະຊາຊົນບັນດາເຜົ່າ.

## ໝວດທີ 8
## ຂໍ້ຫ້າມ

**ມາດຕາ 30 ຂໍ້ຫ້າມສຳລັບຄະນະກຳມະການໄກ່ເກ່ຍຈັດສັນຍົກຍ້າຍ**

1. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບທີ່ການຈັດຕັ້ງໄດ້ມອບໝາຍໃຫ້;

2. ສວຍໃຊ້ສິດ, ໜ້າທີ່, ອຳນາດເກີນຂອບເຂດ, ປິດບັງ, ເຊື່ອງອຳ, ຖ່ວງດຶງ, ປອມແປງເອກະສານ ເຊັ່ນ: ປອມແປງລາຍເຊັນ, ໃບຮັບ-ຈ່າຍເງິນ, ຕາປະທັບ ແລະ ການສຳຫຼວດຂໍ້ມູນອື່ນໆ ທີ່ບໍ່ຖືກຕ້ອງຕາມຄວາມຈິງ;

3. ຮັບເອົາ, ທວງເອົາ, ຕົກລົງຮັບເອົາ ຫຼື ໃຫ້ສິນບົນເພື່ອຜົນປະໂຫຍດສ່ວນຕົວ ຫຼື ຜົນປະໂຫຍດໝູ່ຄະນະ;

4. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ແລະ ນຳໃຊ້ມາດຕະການອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

5. ເປີດເຜີຍຂໍ້ມູນລັບອັນສ້າງຜົນເສຍຫາຍຕໍ່ກັບໂຄງການ ພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ.

**ມາດຕາ 31 ຫ້າມສຳລັບບຸກຄົນ ແລະ ນິຕິບຸກຄົນທົ່ວໄປ**

1. ຫ້າມບຸກລຸກເຂົ້າໄປຕັ້ງຖິ່ນຖານສ້າງເຮືອນທີ່ຢູ່ອາໄສ, ສິ່ງປຸກສ້າງຕ່າງໆ, ຈັບຈອງທີ່ດິນທີ່ຢູ່ໃນເຂດກໍ່ສ້າງ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຢ່າງເດັດຂາດ;

2. ຍົກຍ້າຍ, ປ່ຽນແປງ ຫຼື ທຳລາຍເຂດຫຼັກໝາຍຂອບເຂດສະຫງວນ ຂອງໂຄງການ ພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ;

3. ນຳເຂົ້າແຮງງານ, ພາຫະນະເຄື່ອງຈັກ ແລະ ອຸປະກອນກໍ່ສ້າງຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

4. ຈັບຈອງທີ່ດິນ, ສຳຫຼວດ, ຂຸດຄົ້ນແຮ່, ຫີນ-ຊາຍ ແລະ ດຳເນີນທຸລະກິດຕ່າງໆໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 32 ຫ້າມສຳລັບຜູ້ທີ່ຖືກຜົນກະທົບ**

1. ກີດຂວາງການປະຕິບັດໜ້າທີ່ຂອງຄະນະຮັບຜິດຊອບ, ຄະນະກຳມະການໄກ່ເກ່ຍຜົນກະທົບ ແລະ ພາກສ່ວນທີ່ກ່ຽວຂ້ອງ;

2. ໃຫ້ສິນບົນ, ຄ່າຈ້າງ, ສົມຮູ້ຮ່ວມຄິດກັບຄະນະຮັບຜິດຊອບ, ພະນັກງານອື່ນໆທີ່ກ່ຽວຂ້ອງ;

3. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ຂັດຂວາງ, ໝິ່ນປະມາດ ແລະ ທຳລາຍຫຼັກຖານຂໍ້ມູນຕ່າງໆ;

4. ທວງເອົາ ຫຼື ຮຽກຮ້ອງຄ່າຕອບແທນເກີນຄວາມເປັນຈິງ ໃນກໍລະນີທີ່ລັດໄດ້ທົດແທນໃຫ້;

5. ສ້າງຂໍ້ມູນໃໝ່, ໃສ່ຮ້າຍປ້າຍສີບິດເບືອນຄວາມເປັນຈິງໃນການປະຕິບັດໜ້າທີ່ຂອງພະນັກງານພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 33 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆຕາມລະບຽບການ.

**ມາດຕາ 34 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໄດ້ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນ ທາງແພ່ງ ຫຼື ຖືກລົງໂທດທາງອາຍາຕາມກໍລະນີໜັກ ຫຼື ເບົາຢ່າງທັນການ.

**ມາດຕາ 35 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະແບບເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍຕໍ່າກວ່າຫ້າແສນກີບລົງມາຕ້ອງໄດ້ຖືກຕັກເຕືອນ ແລະ ສຶກສາອົບຮົມ, ກໍລະນີທີ່ມີການກະທຳຜິດເປັນອາຈິນ ແລະ ມີຜົນເສຍຫາຍເກີນຫ້າແສນກີບຂຶ້ນໄປ ຈະຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 36 ມາດຕະການປະຕິບັດທາງວິໄນ**

ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາບາງ ຊຶ່ງບໍ່ເກີນການກະທຳຄວາມຜິດທາງອາຍາຈະຖືກຕິເຕືອນ, ກ່າວເຕືອນຄວາມຜິດ ຫຼື ກໍລະນີບໍ່ຈິງໃຈລາຍງານ, ລົບຫຼີກຈາກຄວາມຜິດຂອງຕົນ ຈະຖືກໂຈະການເລື່ອນຊັ້ນຂັ້ນເງິນເດືອນ, ການຍ້ອງຍໍ ຫຼື ປົດຕຳແໜ່ງຍົກຍ້າຍໄປຮັບຕຳແໜ່ງໃໝ່ທີ່ຕໍ່າກວ່າເກົ່າ ຫຼື ໃຫ້ອອກຈາກລັດຖະກອນ ແລະ ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນຂອງຕົນ ທີ່ໄດ້ມາໂດຍບໍ່ຖືກຕ້ອງຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 37 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ລວມເຖິງເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ສິດ ແລະ ຜົນປະໂຫຍດຂອງປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການ ເນື່ອງຈາກການກະທົບທີ່ບໍ່ຖືກຕ້ອງ ແມ່ນຈະຕ້ອງໄດ້ຮັບການແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 38 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ໃຫ້ແກ່ສິດ, ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການ ຈະຖືກດຳເນີນຄະດີຕາມປະມວນກົດໝາຍອາຍາ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 39 ການຈັດຕັ້ງປະຕິບັດ**

ພາຍຫຼັງ ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ ບັນດາພາກສ່ວນຕ່າງໆ ແລະ ບຸກຄົນທີ່ຖືກແຕ່ງຕັ້ງ, ຮັບມອບໝາຍຈະຕ້ອງຮີບຮ້ອນເກັບກຳຂໍ້ມູນໃຫ້ລະອຽດຮອບດ້ານ, ໂຄສະນາເຜີຍແຜ່ປະຊາສຳພັນໃຫ້ຜູ້ຖືກຜົນກະທົບກະກຽມຍົກຍ້າຍ, ຮັບເອົາຄ່າທົດແທນ ແລະ ແກ້ໄຂຂໍ້ຂັດແຍ່ງ (ຖ້າມີ) ເພື່ອບໍ່ໃຫ້ມີຜົນກະທົບເຖິງການກໍ່ສ້າງໂຄງການ, ອຳນວຍຄວາມສະດວກໃຫ້ຜູ້ຮັບເໝົາກໍ່ສ້າງໂຄງການ ປະຕິບັດໜ້າທີ່ຢ່າງສະດວກ ພາຍຫຼັງສຳເລັດວຽກງານທົດແທນແລ້ວ ຄະນະຮັບຜິດຊອບຕ້ອງໄດ້ສະຫຼຸບ, ລາຍງານ ມອບວຽກຄຸ້ມຄອງບໍລິຫານເຂດສະຫງວນໃຫ້ໂຄງການ ພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ ຄຸ້ມຄອງບໍລິຫານຕໍ່ໄປ;

ທີ່ດິນເຫຼືອຈາກເຂດສະຫງວນຂອງໂຄງການພັດທະນາຕາມແລວທາງເສດຖະກິດ ອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ ແມ່ນໂຄງການຈະເປັນຜູ້ຮັບຜິດຊອບອອກຄ່າໃຊ້ຈ່າຍໃນການ

ດັດແກ້ ແລະ ອອກໃບຕາດິນຄືນໃໝ່ໃຫ້ຜູ້ຖືກຜົນກະທົບ ສ່ວນຕອນດິນທີ່ຍັງເຫຼືອໜ້ອຍ ຫຼື ຫຼາຍຍັງເປັນສິດນຳໃຊ້ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ທີ່ໄດ້ຮັບຜົນກະທົບ;

ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ ຈະໄດ້ຮັບການຊົດເຊີຍກ່ອນ ເພື່ອໃຫ້ຜູ້ຖືກຜົນກະທົບມີເງື່ອນໄຂກະກຽມຍົກຍ້າຍ ແລະ ປຸກສ້າງທີ່ຢູ່ອາໄສໃໝ່;

ຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ ເປັນຕົ້ນແມ່ນ: ຜູ້ພິການ, ຜູ້ເສຍອົງຄະ, ຜູ້ສູງອາຍຸ, ເດັກນ້ອຍ, ແມ່ຮ້າງ, ແມ່ໝ້າຍ, ກຸ່ມຜູ້ທຸກຍາກ ແລະ ຜູ້ທີ່ອາໄສຢູ່ດິນລັດ ທີ່ໄດ້ຮັບຜົນກະທົບຈາກໂຄງການ ພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ ຈະໄດ້ເອົາໃຈໃສ່ພິເສດເພື່ອຟື້ນຟູຊີວິດການເປັນຢູ່ ໃຫ້ຫຼຸດພົ້ນຈາກຄວາມທຸກຍາກ ແລະ ໃຫ້ໄດ້ສະພາບດີຂຶ້ນກ່ອນເກົ່າ;

ມອບໃຫ້ຄະນະຊີ້ນຳຂັ້ນແຂວງ, ຂັ້ນເມືອງ, ອະນຸກຳມະການ ແລະ ຜູ້ພັດທະນາໂຄງການປະສານສົມທົບ ກັບທຸກພາກສ່ວນທີ່ກ່ຽວຂ້ອງເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ໃຫ້ປະກົດຜົນເປັນຈິງ;

ພະແນກການ, ກົມກອງ, ຫ້ອງການ, ອົງການຈັດຕັ້ງຕ່າງໆ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ, ເອກະຊົນ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານການຊົດເຊີຍເປັນແຕ່ລະໄລຍະ.

**ມາດຕາ 40 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ.

**ເຈົ້າແຂວງ**

ບຸນຄົງ ຫຼ້າຈຽມພອນ